ກອງທຶນຫລຸດຜ່ອນຄວາມທຸກຍາກ

# ຄູ່ມືການຝຶກອົບຮົມສຳລັບ
# ຜູ້ປະສານງານກຸ່ມບ້ານ

ພະຈິກ 2012

<u>ພະແນກພັດທະນາຊຸມຊົນ</u>

# ສາລະບານ


ພາກທີ I ພາກສະເໜີທົ່ວໄປ ........ 1

ກ. ຈຸດປະສົງຂອງຊຸດຝຶກອົບຮົມ ........ 1

ຂ. ຄາດໝາຍທີ່ຈະໄດ້ຮັບຈາກການຝຶກອົບຮົມ ........ 1

ຄ. ໃຜແດ່ທີ່ຈະເຂົ້າຮ່ວມກອງປະຊຸມ? ........ 1

ງ. ໃຜຈະເປັນຄູຝຶກ? ........ 1

ຈ. ສະຖານທີ່ຝຶກອົບຮົມຢູ່ໃສ? ........ 1

ພາກທີ II ຫົວຂໍ້, ເນື້ອໃນ ແລະ ວິທີການ ........ 2

- *ບາງຂໍ້ມູນຢູ່ພາຍໃນເມືອງ* ........ 2
- *ປະຫວັດຄວາມເປັນມາຂອງ ທລຍ* ........ 2
- *ຜົນໄດ້ຮັບຂອງ ທລຍ ໃນໄລຍະຜ່ານມາ* ........ 2
- *ຈຸດປະສົງ, ວິໄສທັດ ແລະ ຍຸດທະສາດຂອງ ທລຍ 2* ........ 5
- ▪ ຈຸດປະສົງ: ........ 5
- ▪ ວິໄສທັດ: ........ 5
- ▪ ພາລະກິດ: ........ 5
- ▪ ຍຸດທະສາດຂອງ ທລຍ: ........ 7
- *ຮູບແບບວິທີການເຮັດວຽກຂອງ ທລຍ* ........ 9
- *ຫລັກການ/ລະບຽບພັດທະນາຊຸມຊົນ ຂອງ ທລຍ* ........ 10
- *ພື້ນທີ່ເປົ້າໝາຍ ແລະ ກຸ່ມເປົ້າໝາຍ* ........ 23
- *ໂຄງຮ່າງການຈັດຕັ້ງຂອງ ທລຍ* ........ 24
- ກິດຈະກຳທີ່ ທລຍ *ບໍ່ໃຫ້ການສະໜັບສະໜູນ* ........ 25
- ປະເພດໂຄງການຍ່ອຍ ແລະ ຫົວຂໍ້ຝຶກອົບຮົມ ທີ່ ທລຍ *ໃຫ້ການສະໜັບສະໜູນ* ........ 26
- *ທຶນທີ່ຈະນຳໃຊ້ເຂົ້າໃນ ທລຍ 2 ແລະ ວິທີຈັດສັນເງິນໃຫ້ກຸ່ມບ້ານ* ........ 27
- *ວິທີການຈັດສັນທຶນໃຫ້ກຸ່ມບ້ານ* ........ 27
- *ການປະກອບສ່ວນຂອງຊຸມຊົນ* ........ 28
- *ມາດຕະການໃນການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ* ........ 28
- *ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ* ........ 28
- *ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ* ........ 30
- ❖ ຜູ້ປະສານງານກຸ່ມບ້ານແມ່ນໃຜ? ........ 30
- ຈຳນວນຜູ້ປະສານງານກຸ່ມບ້ານຕໍ່ກຸ່ມບ້ານ ........ 30
- ❖ ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ ........ 30
- ❖ ເງື່ອນໄຂການເລືອກຜູ້ປະສານງານກຸ່ມບ້ານ ........ 31
- ❖ ຂັ້ນຕອນການຄັດເລືອກ ຜູ້ປະສານງານກຸ່ມບ້ານ ........ 32

• *ພາລະບົດບາດຂອງຂະແໜງການທີ່ກ່ຽວຂ້ອງ/ພະນັກງານລັດ* ........ 32
• *ພາລະບົດບາດຂອງພະນັກງານ ທລຍ* ........ 33
• *ກົດເກນ 10 ຢ່າງ ຂອງການເປັນຜູ້ອຳນວຍຄວາມສະດວກທີ່ດີ* ........ 34
1) ຟັງຫລາຍກ່ວາເວົ້າ ........ 34
2) ຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນ ........ 34
3) ໝັ້ນໃຈວ່າຈະໄດ້ຍິນສຽງຂອງແມ່ຍິງ ........ 35
4) ນຳໃຊ້ອຸປະກອນປະຈັກຕາ ຊ່ວຍໃນການອະທິບາຍ ........ 35
5) ຮັບປະກັນ ການເຂົ້າໃຈເປັນລັກສະນະດຽວກັນ ກ່ຽວກັບຂໍ້ຄິດເຫັນຕົ້ນຕໍ ........ 35
6) ຈັ່ງກະກຽມເປັນຢ່າງດີ ........ 35
7) ມີຜູ້ບັນທຶກໜຶ່ງຄົນ ........ 35
8) ບໍລິຫານເວລາຢ່າງສະຫລາດ ........ 35
9) ເລັງເປົ້າໝາຍໃສ່ກຸ່ມທີ່ມີຂະໜາດນ້ອຍກວ່າ ........ 36
10) ຮັກສາການມີອາລົມເບີກບານ ສະນຸກສະໜານ ........ 36
• *ການຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ* ........ 36
• *ການຈັດກອງປະຊຸມວາງແຜນພັດທະນາບ້ານ* ........ 36
• *ການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ* ........ 39
• *ການຈັດກອງປະຊຸມປະສານງານວາງແຜນຂັ້ນເມືອງ* ........ 39
• *ການຈັດກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນພັດທະນາກຸ່ມບ້ານ* ........ 40
ເອກະສານຊ້ອນທ້າຍ ........ 42
ຕາຕະລາງ ຝຶກອົບຮົມໃຫ້ແກ່ຜູ້ປະສານງານກຸ່ມບ້ານ ........ 42

# ພາກທີ I ພາກສະເໜີທົ່ວໄປ

## ກ. ຈຸດປະສົງຂອງຊຸດຝຶກອົບຮົມ

- ເພື່ອໃຫ້ແກ່ຜູ້ປະສານງານກຸ່ມບ້ານ ຮັບຮູ້ກ່ຽວກັບລະບຽບຫລັກການ, ນະໂຍບາຍ, ຂັ້ນຕອນການຈັດຕັ້ງປະຕິບັດໂຄງການ, ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ ແລະ ພຶດຕະກຳ ແລະ ທັດສະນະຄະຕິ ຂອງນັກພັດທະນາຊຸມຊົນ.

## ຂ. ຄາດໝາຍທີ່ຈະໄດ້ຮັບຈາກການຝຶກອົບຮົມ

- ຜູ້ປະສານງານກຸ່ມບ້ານ ມີຄວາມເຂົ້າໃຈກ່ຽວກັບວຽກງານໂຄງການ ທລຍ, ໂຄງຮ່າງການຈັດຕັ້ງ, ລະບຽບຫລັກການ ແລະ ໜ້າວຽກຕ່າງໆ
- ຜູ້ປະສານງານກຸ່ມບ້ານ ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບບັນຫາສຳຄັນຕ່າງໆ ພາຍໃຕ້ວຽກງານ ທລຍ 2
- ຜູ້ປະສານງານກຸ່ມບ້ານມີຄວາມເຂົ້າໃຈພາລະບົດບາດຂອງເຂົາເຈົ້າທີ່ຈະຮັບຜິດຊອບຢູ່ໃນໂຄງການ ທລຍ 2. ລວມທັງພຶດຕະກຳ ແລະ ທັດສະນະຄະຕິ ຂອງນັກພັດທະນາຊຸມຊົນ.

## ຄ. ໃຜແດ່ທີ່ຈະເຂົ້າຮ່ວມກອງປະຊຸມ?

- ໂດຍປົກກະຕິ ປະມານ 25 ຄົນ ຕໍ່ຊຸດ
- ຜູ້ປະສານງານກຸ່ມບ້ານຄົນໃໝ່ທັງໝົດ ທີ່ຢູ່ໃນເມືອງດັ່ງກ່າວ
- ບາງເທື່ອອາດຈະຈັດຮ່ວມກັບເມືອງອື່ນໆທີ່ຢູ່ໃກ້ຄຽງ ໃນກໍລະນີທີ່ຜູ້ເຂົ້າຮ່ວມບໍ່ຮອດ 25 ຄົນ
- ຖ້າຫາກພະນັກງານ ທລຍ ຂັ້ນເມືອງ ເປັນຄົນມາໃໝ່ ແລະ ບໍ່ທັນມີໂອກາດເຂົ້າຝຶກອົບຮົມມາກ່ອນ ກໍສາມາດເຊີນຜູ້ກ່ຽວເຂົ້າຮ່ວມຝຶກອົບຮົມໃນຄັ້ງນີ້.

## ງ. ໃຜຈະເປັນຄູຝຶກ?

- ພະນັກງານ ທລຍ ຜູ້ມີປະສົບການຂັ້ນແຂວງ ເປັນຜູ້ຊ່ວຍພະນັກງານ ທລຍ ຂັ້ນເມືອງ
- ສາມາດເຊີນພະນັກງານ ທລຍ ຈາກເມືອງອື່ນ ປະມານ 2 ຫຼື 3 ຄົນ ມາຊ່ວຍຝຶກອົບຮົມໃນບາງຫົວຂໍ້ວິຊາ
- ສາມາດເຊີນ ພະນັກງານລັດຂັ້ນເມືອງເຂົ້າຮ່ວມນຳ ໃນຖານະເປັນຄູ່ຮ່ວມງານ ແລະ ຊ່ວຍໃນການແລກປ່ຽນບົດຮຽນນຳຜູ້ເຂົ້າຮ່ວມ
- ຜູ້ອະວຸໂສ ຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໂດຍສາມາດບັນຍາຍໃນຫົວຂໍ້ ປະ ສົບການໃນການຈັດຕັ້ງປະຕິບັດການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ຢູ່ຂັ້ນທ້ອງຖິ່ນ.

## ຈ. ສະຖານທີ່ຝຶກອົບຮົມຢູ່ໃສ?

- ຊຸດຝຶກອົບຮົມ ຄວນຈັດຢູ່ຂັ້ນເມືອງ. ບາງຄັ້ງກໍສາມາດຈັດຂຶ້ນຢູ່ເມືອງໃກ້ຄຽງ ຫລືອາດຈະລວມກັນ 2 ຫຼື 3 ເມືອງກໍໄດ້ ທັງນີ້ຂຶ້ນກັບຈຳນວນຜູ້ເຂົ້າຮ່ວມ.

# ພາກທີ II ຫົວຂໍ້, ເນື້ອໃນ ແລະ ວິທີການ

ສິ່ງຕ້ອງການ ໃນການເຮັດວຽກງານ ທລຍ ຄວນເລີ່ມຕົ້ນຈາກການອະທິບາຍ ບັນຫາດັ່ງກ່າວນີ້:

- *ບາງຂໍ້ມູນຢູ່ພາຍໃນເມືອງ*

  ປຶກສາຫາລື ກ່ຽວກັບ:

  - ບ້ານທີ່ຂາດການເຂົ້າເຖິງພື້ນຖານໂຄງລ່າງ. ບ້ານຕ້ອງ ການສ້າງພື້ນຖານໂຄງລ່າງ
  - ບ້ານທີ່ມີຄົບຖ້ວນທາງດ້ານທາງ,ໂຮງຮຽນ, ລະບົບນ້ຳສະອາດ, ສຸກສາລາ, ຊົນລະປະທານ.

- *ປະຫວັດຄວາມເປັນມາຂອງ ທລຍ*

  ທລຍ ໄດ້ຖືກສ້າງຕັ້ງຂຶ້ນ ໃນທ່າມກາງທີ່ລັດຖະບານ ແຫ່ງ ສ ປ ປ ລາວ ມີຄວາມພະຍາຍາມໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ. ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ສ້າງຕັ້ງແຕ່ປີ 2002. ຕາມດຳລັດຂອງລັດຖະມົນຕີ ເລັກທີ່ 222/ນຍ.

  ທລຍ ແມ່ນການຈັດຕັ້ງນຶ່ງ ທີ່ເປັນເຈົ້າຕົນເອງ ທາງດ້ານການເງິນ, ທລຍ ຢູ່ພາຍໃຕ້ການຊີ້ນຳ ຂອງປະທານຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ, ຫ້ອງວ່າການລັດຖະ ບານ.

  ຜູ້ເຂົ້າຮ່ວມຄວນເຂົ້າໃຈວ່າ ທລຍ ບໍ່ແມ່ນອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ແຕ່ເຮັດວຽກຄ້າຍຄືກັນ ໂດຍສະເພາະເຮັດວຽກຢ່າງໃກ້ຊິດກັບຊຸມຊົນ ແລະ ຮັບຜິດຊອບໃນການຫລຸດຜ່ອນຄວາມ ທຸກຍາກ.

- *ຜົນໄດ້ຮັບຂອງ ທລຍ ໃນໄລຍະຜ່ານມາ*

  ທລຍ ເຮັດວຽກຮ່ວມກັບຊຸມຊົນ, ພະນັກງານລັດຂັ້ນທ້ອງຖິ່ນ ແລະ ອົງການຈັດຕັງມະຫາຊົນຢູ່ເຂດຊຸມຊົນທຸກຍາກຫ່າງໄກສອກ ຫລີກ ທລຍ ໄລຍະຢູ່ໃນ .1 ແລະ ໄລຍະສືບຕໍ່ໂຄງການນັ້ນ ທລຍ ໄດ້ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນ 2.185 ບ້ານໃນການ ວາງແຜນ, ບໍລິຫານຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ບົວລະບັດຮັກສາ 3.179 ໂຄງການຍ່ອຍ ທີ່ເປັນການເພີ່ມການເຂົ້າເຖິງການບໍລິ ການ, ການສ້າງຄວາມສາມາດໃຫ້ພາກລັດຂັ້ນທ້ອງຖິ່ນ ແລະ ການສ້າງໂອກາດໃນການປ່ຽນແປງຊີວິດການເປັນຢູ່ຂອງຊຸມຊົນ ໃນນັ້ນລວມມີ:

  - ຂົວ 56 ແຫ່ງ
  - ຖະຫນົນຫົນທາງ ຫລາຍກວ່າ 3.000 ກິໂລແມັດ
  - ຊົນລະປະທານ 156 ລະບົບ
  - ນ້ຳສະອາດ 669 ແຫ່ງ
  - ສຸກສາລາ 65 ຫລັງ
  - ໂຮງຮຽນ 616 ຫລັງ
  - ວັງສະຫງວນຂອງຊຸມຊົນ 254 ແຫ່ງ ແລະ
  - ປ່າສະຫງວນຊຸມຊົນ 195 ແຫ່ງ




*ໂຮງຮຽນປະຖົມ ທີ່ກໍ່ສ້າງໂດຍຊຸມຊົນ  ໂດຍການຊ່ວຍເຫລືອບາງດ້ານຈາກ ທລຍ*



*ທາງເຂົ້າຫາບ້ານ ທີ່ກໍ່ສ້າງໂດຍຊຸມຊົນ  ໂດຍການຊ່ວຍເຫລືອບາງດ້ານຈາກ ທລຍ*




*ຂົວອູ່ ທີ່ກໍ່ສ້າງໂດຍຊຸມຊົນ ໂດຍການຊ່ວຍເຫລືອບາງດ້ານຈາກ ທລຍ*




*ຝາຍກັນນໍ້າ ສໍາລັບເຮັດຊົນລະປະທານ ທີ່ກໍ່ສ້າງໂດຍຊຸມຊົນ ໂດຍການຊ່ວຍເຫລືອບາງດ້ານຈາກ ທລຍ*



*ລະບົບນໍ້າລິນ  ທີ່ກໍ່ສ້າງໂດຍຊຸມຊົນ  ໂດຍການຊ່ວຍເຫລືອບາງດ້ານຈາກ ທລຍ*

- ***ຈຸດປະສົງ, ວິໃສທັດ ແລະ ຍຸດທະສາດຂອງ ທລຍ 2***

  - **ຈຸດປະສົງ:**

ເພື່ອປັບປຸງການເຂົ້າເຖິງ ແລະ ການນໍາໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການຢູ່ຊຸມຊົນທຸກຍາກໃນເຂດຊົນນະບົດ, ປັບປຸງການພັດທະນາທີ່ມີຄວາມຍືນຍົງ ໂດຍຜ່ານການເຂົ້າຮ່ວມຂອງຊຸມຊົນ ແລະ ອໍານາດການປົກຄອງຂັ້ນທ້ອງຖິ່ນ ຢູ່ໃນທຸກຂັ້ນຕອນຂອງການພັດທະນາ.

  - **ວິໃສທັດ:**

ເພື່ອໃຫ້ເກີດມີການພັດທະນາທີ່ຍືນຍົງນັ້ນ ທລຍ ຈະຕ້ອງເອົາໃຈໃສ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ຈົນເຮັດໃຫ້ເຂົາເຈົ້າສາມາດດໍາເນີນການພັດທະນາ ໂດຍເຂົາເຈົ້າເອງໄດ້. ໃນເມື່ອຊຸມຊົນມີຄວາມເຂັ້ມແຂງແລ້ວ ຫຼື ສາມາດຈັດຕັ້ງປະຕິບັດເອງໄດ້ແລ້ວ ກໍ່ຈະເຮັດໃຫ້ບ້ານ ຂອງ ເຂົາເຈົ້າໄດ້ມີການພັດທະນາຂຶ້ນ, ໃນເມື່ອບ້ານໄດ້ຮັບການພັດທະນາ ກໍ່ໝາຍຄວາມວ່າກຸ່ມບ້ານ, ເມືອງ, ແຂວງ ກໍ່ຄືປະເທດຊາດ ໄດ້ການພັດທະນາເຊັ່ນດຽວກັນ.

  - **ພາລະກິດ:**

ຕອບສະໜອງ ແລະ ສ້າງຄວາມເຂັ້ມແຂງແບບຍືນຍົງໃຫ້ແກ່ທ້ອງຖິ່ນ, ສ້າງຂັ້ນຕອນ ແລະ ລະບົບການພັດທະນາ ໂດຍໃຫ້ ສອດຄ່ອງກັບນະໂຍບາຍ ການແບ່ງຂັ້ນຄຸ້ມຄອງ ແລະ ເປົ້າໝາຍການແກ້ ໄຂຄວາມທຸກຍາກຂອງລັດຖະບານ.

***ທລຍ ດໍາເນີນງານ ດ້ວຍຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ, ຄວາມທຸກຍາກຫຼຸດລົງ, ກຸ່ມເປົ້າໝາຍມີການປ່ຽນແປງທີ່ດີຂຶ້ນ ຈົນກ້າວໄປສູ່ອະນາຄົດທີ່ສົດໃສກວ່າ***



*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ຮູບທີ່ພວກເຮົາເຫັນຢູ່ນີ້ແມ່ນຕົ້ນ ໄມ້ຕົ້ນໜຶ່ງທີ່ງອກງາມ ແລະ ແຂງແຮງ ຊຶ່ງໝາຍເຖິງສັງຄົມ ຂອງພວກເຮົາ ຫຼື ປະເທດຊາດຂອງພວກເຮົາ. ສາເຫດທີ່ມັນແຂງແຮງ ກໍ່ຍ້ອນມີຮາກມີເຫງົ້າຫລາຍຍຶດເກາະກັບພື້ນດິນ ຢ່າງໜຽວແໜ້ນ. ໝາຍ ເຖິງພໍ່ແມ່ປະຊາຊົນ ຫຼື ຊຸມຊົນຂອງພວກເຮົາ. ສາເຫດທີ່ຮາກເຫງົ້າ ແລະ ຕົ້ນໄມ້ ຕົ້ນນີ້ມີຄວາມແຂງແຮງກໍ່ຍ້ອນການເອົາ ໃຈໃສ່ຫົດນໍ້າ ແລະ ໃສ່ ຝຸ່ນຢ່າງເປັນປົກກະຕິ.ສະນັ້ນ ວິໄສທັດ ຫຼື ທິດທາງການພັດທະນາຂອງ ທລຍ ກໍ່ປຽບເໝືອນຕົ້ນໄມ້ ຕົ້ນນີ້ ໂດຍສະເພາະ ເພື່ອໃຫ້ເກີດມີການພັດທະນາທີ່ຍືນຍົງນັ້ນ ທລຍ ຈະຕ້ອງເອົາໃຈໃສ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ຈົນເຮັດໃຫ້ເຂົາເຈົ້າສາ ມາດດໍາເນີນການພັດທະນາ ໂດຍເຂົາເຈົ້າເອງໄດ້. ໃນເມື່ອຊຸມຊົນມີຄວາມເຂັ້ມແຂງແລ້ວ ຫຼື ສາມາດຈັດຕັ້ງປະຕິບັດເອງໄດ້ແລ້ວ ກໍ່ຈະເຮັດໃຫ້ບ້ານຂອງເຂົາເຈົ້າໄດ້ມີການພັດທະນາໄປໃນທາງທີ່ດີຂຶ້ນ, ໃນເມື່ອບ້ານໄດ້ຮັບການ ພັດທະນາ ກໍ່ໝາຍຄວາມວ່າກຸ່ມບ້ານ, ເມືອງ, ແຂວງກໍ່ຄືປະເທດຊາດ ໄດ້ການ ພັດທະນາເຊັ່ນ ດຽວກັນ.

- ## ຍຸດທະສາດຂອງ ທລຍ:

| ທິດທາງການເຮັດວຽກ ທລຍ 2 | | ວິທີການ/ຜົນກະທົບທີ່ຄາດຫວັງ | ໝາກຜົນ |
|---|---|---|---|
| *I. ການວາງແຜນແບບມີສ່ວນຮ່ວມ* | | | |
| 1. | ເພີ່ມທະວີການພັດທະນາແບບມີສ່ວນຮ່ວມຂອງຊຸມຊົນ ໂດຍສະ ເພາະໃນຂັ້ນຕອນການ ວາງແຜນ | ທັງສອງກອງປະຊຸມ ຄື: **ກອງປະຊຸມວາງແຜນພັດທະນາບ້ານ** ແລະ**ກອງປະຊຸມວາງແຜນພັດທະນາກຸ່ມບ້ານ** ຊຶ່ງແຕ່ລະຂັ້ນຈະໄດ້ຈັດຂຶ້ນ ເປັນເວລາ 2 ມື້ ໃນນັ້ນຈະ ໄດ້ເນັ້ນ**ໜັ**ກໃສ່ການມີສ່ວນຮ່ວມຂອງຊຸມຊົນຢ່າງເຕັມ ສ່ວນໂດຍສຸມໃສ່ການຈໍາແນກ ແລະ ເຂົ້າໃຈເຖິງສາຍເຫດ ຄວາມທຸກຍາກ ແລະ ຜົນກະທົບຂອງມັນຢູ່**ແຕ່ລະບ້ານ**. ປັບປຸງເຄື່ອງມືເຜີຍແຜ່ຂໍ້ມູນ-ຂ່າວສານທັງນີ້ ເພື່ອປູກຝັງຈິດສໍານຶກ ແລະ ເພີ້ມຄວາມເຂົ້າໃຈຂອງ ມະຫາຊົນ ກ່ຽວກັບຫລັກການ ແລະວິທີການເຮັດວຽກຂອງ**ທລຍ.** | ການມີສ່ວນຮ່ວມທີ່ເຂັ້ມແຂງ ຕະຫລອດໄລຍະຮອບວຽນຂອງໂຄງການ (ການວາງແຜນ, ອອກແບບໂຄງການຍ່ອຍ, ຈັດຕັ້ງ ປະ ຕິບັດ, ການຄຸ້ມຄອງການເງິນ, ການຕິດ ຕາມ ແລະ ປະເມີນຜົນ) ແມ່ນມີຄວາມສໍາ ຄັນ ເພື່ອເຮັດໃຫ້ໂຄງການທີ່ນໍາໃຊ້ຮູບແບບກ**ານພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ໄດ້ຮັບຜົນ.** |
| 2. | **ເນັ້ນ**ໜັກໃສ່ **ການ**ວາງແຜນແບບຮອບດ້ານ | ທັງສອງກອງປະຊຸມ ຄື: ກອງປະຊຸມວາງແຜນ ພັດທະ ນາບ້ານ ແລະວາງແຜນພັດທະນາກຸ່ມບ້ານ ເນັ້ນໜັກໃສ່ການວາງແຜນແບບກວ້າງໃນໄລຍະຍາວ ແລະ ກໍານົດເປົ້າໝາຍການພັດທະນາ, ບໍ່ແມ່ນພຽງແຕ່**ສະໜອງ**ໂຄງລ່າງ (ເຖິງວ່າ **ທລຍ** 2 ຈະສະໜັບສະໜູນທຶນ**ໃຫ້**ແກ່ໂຄງການຍ່ອຍດ້ານພື້ນຖານໂຄງລ່າງ**ກໍຕາມ**). | ຊຸມຊົນພິຈາລະນາເອງໃນທຸກດ້ານ ກ່ຽວກັບການກໍານົດເປົ້າໝາຍການພັດທະນາ ແລະ ຈັດລໍາດັບບູລິມະສິດຄວາມຕ້ອງການ ຊຶ່ງ ນອນຢູ່ໃນຂັ້ນຕອ**ນ** ການວາງແຜນ**ພັດທະນາບ້ານ** ແລະ **ການວາງແຜນພັດທະນາກຸ່ມບ້ານ**. ນອກຈາກນັ້ນແຜນພັດທະນາກຸ່ມ ບ້ານດັ່ງກ່າວ ຍັງປະຕິບັດຕາມທິດທາງ ການ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກແຫ່ງຊາດ ໝາຍຄວາມວ່າ ເປັນຜູ້ ສ້າງແຜນ, ແຕ່ລັດ ແລະ ໂຄງການພັດທະ ນາອື່ນໆ ສາມາດນໍາໃຊ້. |
| 3. | ຍົກສູງບົດບາດ ຂອງແມ່ຍິງເຂົ້າໃນ ການ ຈັດຕັ້ງປະຕິບັດວຽກງານຂອງໂຄງການ ໃນທຸກດ້ານ | ເພີ່ມການຝຶກອົບຮົມຕື່ມ ກ່ຽວກັບຄວາມສະເໝີໃນດ້ານ ບົດບາດຍິງ-ຊາຍ ເພື່ອຮັບປະກັນວ່າເປົ້າໝາຍທີ່ລະອຽດອ່**ອ**ນດ້ານ ບົດບາດຍິງ-ຊາຍ ມີຜົນສໍາເລັດ. ສືບຕໍ່ການເຂົ້າຮ່ວມຂອງແມ່ຍິງ ໂດຍສະເພາະການເປັນ ຜູ້ປະສານງານກຸ່ມບ້ານ ແລະ ຕົວແທນບ້ານ. | **ຄ**ວາມພາກພຽນພະຍາຍາມຫລຸດຜ່ອນຄວາມທຸກຍາກ ມີທ່າອ່ຽງທີ່ຈະບໍ່ມີປະສິດ ທິພາບ ຖ້າຫາກວ່າມັນບໍ່ໃຫ້ແມ່ຍິງ ແລະ ກຸ່ມ**ດ້ອຍໂອກາດ**ອື່ນໆ ມີສ່ວນຮ່ວມໂດຍກົງ ໃນຂະບວນການຕັດສິນໃຈ. |
| *II. ສ້າງຂີດຄວາມສາມາດ ແລະ ຄວາມເປັນເຈົ້າການ ຂອງຊຸມຊົນ* | | | |
| 4. | ການວາງແຜນໄລຍະເວລາ 4 ປີ ໂດຍການໃຫ້**ຄໍາ**ໝັ້ນສັນຍາຕໍ່ການ ສະໜອງທຶນໄລຍະຍາວຈາກ **ທລຍ** | ກຸ່ມບ້ານຈະສ້າງແຜນພັດທະນາກຸ່ມບ້ານ ເພື່ອກໍານົດບູລິມະສິດ ຄວາມຕ້ອງການ ແລະ ເປົ້າ ໝາຍການພັດທະນາຂອງເຂົາເຈົ້າ ໃນໄລຍະເວລາ 4 ປີ. ການສະໜອງທຶນຈະຖືກຈັດ**ແບ່ງ**ໃຫ້ແຕ່ລະກຸ່ມ | ການຫລຸດຜ່ອນຄວາມທຸກຍາກ ແມ່ນຂະບວນການນຶ່ງທີ່ໃຊ້ເວລາຍາວນານ, ສິ່ງດັ່ງກ່າວນີ້ ຈະເປັນ ການອໍານວຍໃຫ້ຊຸມຊົນມີທັດສະນະໃນໄລຍະຍາວ ກ່ຽວກັບການພັດທະ ນາ |

| | | | |
|---|---|---|---|
| | | ເປັນໄລຍະ 4 ປີ. | ແລະ ສ້າງຄວາມໝັ້ນໃຈໃນຄວາມອາດສາມາດຂອງເຂົາເຈົ້າ ທີ່ຈະຈຳແນກ ແລະ ດຳເນີນການແກ້ໄຂບັນຫາຮາກເຫງົ້າຂອງຄວາມທຸກຍາກ. |
| 5. | ເພີ່ມການຄຸ້ມຄອງຂອງຊຸມຊົນ ຕໍ່ຊັບພະຍາກອນຕ່າງໆຂອງໂຄງການ | ຊຸມຊົນຈະເປັນຜູ້ ຄຸ້ມຄອງຊັບພະຍາກອນຢ່າງເຕັມສ່ວນ ໃນນີ້ລວມທັງການຕັດສິນໃຈ ແລະ ການນຳໃຊ້ຊັບພະຍາກອນຕ່າງໆເຫລົ່ານັ້ນ ເຊັ່ນ: ວຽກງານການຈັດຊື້-ຈັດຈ້າງ ທີ່ດຳເນີນການໂດຍຊຸມຊົນຈະໄດ້ຮັບການຊຸກຍູ້. | ການເພີ່ມການຄວບຄຸມຊັບພະຍາກອນ ໂດຍ ຊຸມຊົນຈະເປັນການລິເລີ່ມ ການສ້າງຄວາມເປັນເຈົ້າ ການໃຫ້ເຂົາເຈົ້າ. ສິ່ງດັ່ງກ່າວນີ້ ຍັງຈະເຮັດໃຫ້ເປັນ ການປັບປຸງ ທັງດ້ານຄຸນນະ ພາບຂອງໂຄງການ ແລະ ເຮັດໃຫ້ການໃຊ້ ຈ່າຍງົບປະມານມີປະສິດທິ ພາບຂຶ້ນ. |
| 6. | ເພີ່ມການສ້າງຄວາມໂປ່ງໃສ ແລະ ການກວດສອບຢູ່ໃນລະດັບຊຸມຊົນ | ເສີມຂະຫຍາຍ ກົນໄກການສະແດງຄຳຄິດຄຳ ເຫັນ ແລະ ແກ້ໄຂບັນຫາ. ປັບປຸງອຸປະກອນເຜີຍແຜ່ຂໍ້ມູນ-ຂ່າວສານ ແລະ ວິທີການປຸກລະດົມໂຄສະນາອົບ ຮົມ ເພື່ອຮັບປະກັນວ່າ ຊຸມຊົນມີຄວາມເຂົ້າໃຈກ່ຽວ ກັບລະບຽບ ຫລັກການ ແລະ ວິທີການເຮັດວຽກຂອງ ທລຍ 2. | ກົນໄກ**ທີ່**ສ້າງ**ໃຫ້ມີ**ຄວາມໂປ່ງໃສ ແລະ ການ ກວດສອບ ແມ່ນມີຄວາມຈຳເປັນພາຍໃຕ້ ໂຄງການ**ພັດທະນາ ທີ່ຂັບເຄື່ອນໂດຍຊຸມ ຊົນເອງ.** ຊຶ່ງຈະເປັນການຮັບປະກັນໃຫ້ການນຳໃຊ້ຊັບງົບປະ ມານ ຂອງໂຄງການໃຫ້ເກີດປະໂຫຍດສູງ, ເຮັດໃຫ້ຊຸມຊົນທຸກຄົນໄດ້ຮັບ ທຸກໆຂໍ້ມູນ-ຂ່າວສານຂອງໂຄງການ ຊຶ່ງຈະ ເຮັດໃຫ້ມີຄວາມໂປ່ງໃສຂຶ້ນ |
| *III. ເລັງເປົ້າໝາຍໃສ່ຜູ້ທຸກຍາກ ຢ່າງມີປະສິດທິພາບ* | | | |
| 7. | ເລັງເປົ້າໝາຍໃສ່ຜູ້ທຸກຍາກຫລາຍ ຂຶ້ນ | 66% ຂອງໂຄງການຍ່ອຍທັງໝົດ ຈະຕ້ອງສ້າງປະໂຫຍດໃຫ້ແກ່ໝູ່ບ້ານທີ່ທຸກຍາກທີ່ສຸດ, ເລວັ້ງໃສ່ຜົນກະທົບທີ່ ຈະໄດ້ຮັບທີ່ຈະໄດ້ຕາມພາຍຫລັງ ຫລາຍກວ່າຜົນ ຜະລິດທີ່ເຫັນ. (ຕົວຢ່າງ ປັບປຸງອັດຕາການເຂົ້າຮຽນແທນທີ່ຈະເອົາການກໍ່ສ້າງໂຮງຮຽນ). | ເພື່ອໃຫ້ການຫລຸດຜ່ອນຄວາມທຸກຍາກໃຫ້ມີປະສິດທິພາບທີ່ສຸດການເລວັ້ງເປົ້າໝາຍຄວາມທຸກຍາກຢ່າງຮອບຄອບແມ່ນສິ່ງຈຳເປັນໃນທັງລະດັບຄົວເຮືອນ ແລະ ບ້ານ. |
| 8. | ເນັ້ນໜັກໃສ່ການເຂົ້າເຖິງ ແລະ ການນຳໃຊ້**ພື້ນຖານ**ໂຄງລ່າງຫລາຍ ກວ່າການກໍ່ສ້າງ | ຮັບປະກັນ ຍຸດທະສາດຂອງໂຄງການຍ່ອຍໄດ້ຮັບຜົນສຳເລັດ ທັງນີ້ເພື່ອໃຫ້ໄດ້ປະໂຫຍດສູງສຸດ ແລະ ໃຫ້ຊຸມ ຊົນເຂົ້າເຖິງການນຳໃຊ້ໄດ້. ສົ່ງເສີມການສະໜັບສະ ໜູນ ຫລື ເພີ່ມການຝຶກອົບຮົມໃຫ້ແກ່ຊຸມຊົນ ໃນການເພີ່ມທະວີການນຳໃຊ້ ແລະ ການເຂົ້າເຖິງໂຄງການຍ່ອຍ (ເຖິງຢ່າ**ງ**ໃດກໍຕາມ, ການສະໜອງທຶນໂດຍ **ທລຍ** ຈະບໍ່ມີໃຫ້ແກ່ການຝຶກອົບຮົມວິຊາຊີບ ທີ່ມີລັກສະນະແບບໂດດດ່ຽວ. | ໂຄງລ່າງພື້ນຖານ ຈະບໍ່ມີປະໂຫຍດ ຖ້າຫາກວ່າ:<br>• ບໍ່ສາມາດເຂົ້າເຖິງໄດ້ຢ່າງສະດວກ (ໂດຍສະເພາະຕໍ່ຄົວເຮືອນ ທີ່ທຸກຍາກທີ່ສຸດ)<br>• ຊຸມຊົນ ບໍ່ຮູ້ວ່າ ຈະນຳໃຊ້ຄືແນວໃດ<br>• ການບຳລຸງຮັກສາບໍ່ໄດ້ ຫລື ບ້ານບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການບຳລຸງຮັກສາ<br>• ຊຸມຊົນບໍ່ເຂົ້າໃຈ ກ່ຽວກັບຄຳວ່າເປັນເຈົ້າ ການ. |
| *IV. ເຮັດວຽກຢ່າງໃກ້ຊິດ ຮ່ວມກັບເບື້ອງລັດ* | | | |
| 9. | ເນັ້ນໜັກ ກ່ຽວກັບການ | ຄວາມພະຍາຍາມ ທີ່ໜຽວແໜ້ນທີ່ຈະໃຫ້ອົງ | ເພື່ອຮັບປະກັນ ຄວາມຍືນຍົງໃນໄລຍະ |

| | | | |
|---|---|---|---|
| | ສ້າງຂີດຄວາມສາມາດຂອງບັນດາສະຖາບັນຂອງລັດ. | ການລັດມີສ່ວນກ່ຽວພັນ ແລະ ສ້າງຂີດຄວາມສາມາດຂອງພະນັກງານ **ທລຍ** ແລະ ຄູ່ຮ່ວມງານລັດໃນທຸກລະດັບ, ໂດຍສະເພາະຜ່ານວິທີທາງ " ທັງຮຽນທັງເຮັດ" | ຍາວ, ຈຶ່ງມີຄວາມຈຳເປັນ ສຳລັບເບື້ອງລັດ ຜູ້ທີ່ເປັນເຈົ້າພາບ (ໃນລະດັບ ສູນກາງ, ແຂວງ, ເມືອງ ແລະ ກຸ່ມບ້ານ) ໄດ້ຮັບການເຜີຍແຜ່ ກ່ຽວກັບວິທີທາງແບບມີສ່ວນຮ່ວມ ແລະ ມີບົດບາດ ໃນການຈັດຕັ້ງປະຕິບັດທຸກໜ້າ ວຽກຂອງໂຄງການ. |
| 10. | ເລັ່ງໃສ່ລະດັບກຸ່ມບ້ານຫລາຍກວ່າລະດັບບ້ານ | ການຕັດ**ສິນ**ໃຈ ກ່ຽວກັບການຄັດເລືອກໂຄງ ການຍ່ອຍ ຈະໄດ້ດຳເນີນຢູ່ລະດັບກຸ່ມບ້ານ (ໂດຍຕົວແທນຂອງບ້ານ ຢູ່ໃນໄລຍະຢູ່ກອງປະ ຊຸມ**ວາງແຜນພັດທະນາກຸ່ມບ້ານ) ທລຍ 2** ສ້າງ ຄວາມເຂັ້ມແຂງ ໃນການເຊື່ອມຕໍ່ລະຫວ່າງ ການວາງແຜນ ແລະ ງົບປະມານທີ່ຈັດສັນໃຫ້. | ການພັດທະນາທີ່ມີປະສິດທິພາບ ຮຽກຮ້ອງໃຫ້ດຳເນີນວິທີການພັດທະນາທີ່ກວ້າງອອກໄປ ແລະລວມທັງດ້ານຍຸດທະສາດ (ນອກເໜືອຈາກລະດັບບ້ານ) ທັງນີ້ເພື່ອເພີ່ມຜົນກະທົບຈາກໂຄງການໃຫ້ຫລາຍຂື້ນ. ການ ເລັ່ງໃສ່ລະດັບກຸ່ມບ້ານ ຍັງສອດຄ່ອງກັບທິດທາງນະໂຍບາຍຂອງລັດ. ໂດຍການສະ ໜອງທຶນໂຄງການໄລຍະ 4 ປີ, ອັນນີ້ຈະ ເປັນ**ການ**ເອື້ອອຳນວຍໃຫ້ແກ່ການວາງແຜນ ໃນໄລຍະຍາວ. |

- *ຮູບແບບວິທີການເຮັດວຽກຂອງ ທລຍ*

## ຮູບແບບການດຳເນີນວຽກງານ ທລຍ 2 = ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ

### ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແມ່ນຫຍັງ?

- ໝາຍເຖິງວິທີການປະຕິບັດຕໍ່ຄົນທຸກຍາກ ລວມທັງສະຖາບັນຂອງເຂົາເຈົ້າ ທັງນີ້ເພື່ອການພັດທະນາມີຄວາມແບບຍືນຍົງ
- ໝາຍເຖິງຮູບແບບວິທີການ ທີ່ໃຫ້ຊຸມຊົນ ເປັນຜູ້ຕັດ ສິນໃຈໃນການວາງແຜນເອງ ແລະ ຄຸ້ມຄອງຊັບພະຍາກອນລົງທຶນ.
- ໝາຍເຖິງການດຳເນີນງານບົນຫລັກການມອບສິດໃຫ້ແກ່ທ້ອງຖິ່ນ, ມີສ່ວນຮ່ວມໃນການປົກຄອງ, ຕອບສະໜອງຄວາມຕ້ອງການຢ່າງທັນການ, ການກຸ້ມຕົນເອງທາງດ້ານການບໍລິຫານ, ມອບຄວາມຮັບຜິດຊອບໃຫ້ຂັ້ນລຸ່ມ ແລະ ເພີ່ມຂີດຄວາມສາມາດໃຫ້ແກ່ທ້ອງຖິ່ນ.
- ອີງໃສ່ປະສົບການຜ່ານມາ ສະແດງໃຫ້ເຫັນວ່າ ຖ້າຫາກມີການກຳນົດລະບຽບຫລັກການທີ່ຈະ ແຈ້ງ, ການເຂົ້າເຖິງຂໍ້ມູນຂ່າວສານ, ມີຄວາມສາມາດທີ່ເໝາະສົມ ແລະ ມີການສະໜັບສະໜູນທາງດ້ານທຶນຮອນແລ້ວ ຄົນທຸກຍາກບໍ່ວ່າຈະຊາຍ ຫລືຍິງກໍ່ສາມາດຈັດຕັ້ງກັນເພື່ອກຳນົດບູລິມະສິດຂອງຊຸມຊົນ ແລະແກ້ໄຂບັນຫາບັນທ້ອງຖິ່ນໄດ້ຢ່າງມີປະສິດທິຜົນ ໃນນັ້ນໂດຍການຮ່ວມມືຂອງອົງການຈັດຕັ້ງລັດຂັ້ນທ້ອງຖິ່ນ ແລະພາກສ່ວນທີ່ໃຫ້ການສະໜັບສະໜູນອື່ນໆ.

ສະຫລຸບແລ້ວ *ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ໝາຍເຖິງ:*

☞ ແມ່ນເປັນຄົນວາງແຜນ?

☞ ແມ່ນໃຜຈະເປັນຄົນຈັດຕັ້ງປະຕິບັດ?

☞ ແມ່ນໃຜຈະເປັນຄົນຄຸ້ມຄອງ ແລະ ບໍລິຫານໂຄງການຍ່ອຍ?

☞ ແມ່ນໃຜຈະເປັນຄົນຕິດຕາມ?

☞ ແມ່ນໃຜຈະເປັນຄົນປະເມີນຜົນ?

# *ຊຸມຊົນ*

*ມາຈາກປະຊາຊົນ*
*ໂດຍປະຊາຊົນ ແລະ*
*ເພື່ອຜົນປະໂຫຍດຂອງປະຊາຊົນ*

- *ຫລັກການ/ລະບຽບພັດທະນາຊຸມຊົນ ຂອງ ທລຍ*

## ລະບຽບທີ 1: ຄວາມສາມັກຄີ



*ຖາມ: ຮູບນີ້ ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?*

ຄວາມສາມັກຄີ ແມ່ນລະບຽບອັນທຳອິດ ກ່ຽວກັບການພັດທະນາຊຸມຊົນ ຂອງກອງທຶນຫຼຸດຜ່ອນຄວາມ ທຸກຍາກ ໄລຍະທີ່ 2 . ຄວາມສາມັກຄີ ແມ່ນການຮ່ວມໄມ້ຮ່ວມມືກັນ ລະຫວ່າງ ພໍ່ແມ່ປະຊາຊົນ ໝົດທຸກຄົນພາຍໃນບ້ານ ຂອງພວກເຮົາໃນການມີສ່ວນຮ່ວມໃນການດຳເນີນກິດຈະກຳການພັດທະນາຕ່າງໆຂອງບ້ານເພື່ອສ້າງສາບ້ານເມືອງ ຂອງພວກເຮົາເພື່ອໃຫ້ໄດ້ຮັບການພັດທະນາ ແລະ ຫລຸດພົ້ນອອກຈາກ ຄວາມທຸກຍາກ. ເວົ້າລວມແລ້ວ ເພື່ອເຮັດ ໃຫ້ບ້ານຂອງພວກເຮົາມີຄວາມກ້າວໜ້າສີວິໄລໃນ ອະນາຄົດ. ຖ້າມີຄວາມສາມັກຄີກັນແລ້ວເຮັດອັນໃດກໍ່ຈະໄດ້ຮັກ ຜົນສຳເລັດ ດັ່ງຄຳສຸພາສິດທີ່ວ່າ: “ ໄມ້ລຳດຽວລ້ອມຮົ້ວບໍ່ໄຄ◌່ວ ໄຜ່ບໍ່ພ້ອມແປງບ້ານບໍ່ເຮືອງ”

**<u>ຄວາມໝາຍຂອງຮູບ</u>**

ຮູບນີ້ ພວກເຮົາສັງເກດເຫັນວ່າ ຄືການແຂ່ງເຮືອ ພວກເຮົາຈະເຫັນເຮືອທີ່ມີຫຼາຍຄົນພາຍເປັນຜ◌ູ້ຊະນະ, ໄປຖືກທິດທາງ ແລະ ໄປເຖິງທີ່ໝາຍໄວກ່ວາ ເຊິ່ງມັນໝາຍຄວາມວ່າ ການພັດທະນາບ້ານຕ້ອງແມ່ນຄົນໃນບ້ານມີ ຄວາມສາມັກຄີກັນຈຶ່ງມີນຜົນສຳເລັດ, ປະຕິບັດຕາມທິດທາງແຜນການດຽວກັນ ທີ່ໄດ້ວາງໄວ້ຮ່ວມກັນ ຖ້າບໍ່ມີ ຄວາມສາມັກຄີ ແລ້ວເຮັດຫຍັງກໍບໍ່ມີຜົນສຳເລັດ. ສ່ວນຮູບເຮ◌ືອທີ່ມີຄົນພາຍຜ◌ູ້ດຽວຈຶ່ງໄປຄົນລະທິດລະທາງ, ຜ◌ູ້ພາຍກໍ່ອິດເມອື◌່ຍຫຼາຍ, ຮອດທີ່ໝາຍຊັກຊ້າກວ່າ, ຊຶ່ງພາບນີ້ໝາຍຄວາມວ່າ ຖ້າຫາກພໍ່ແມ່ປະຊາຊົນ ແລະ ໝົດທຸກຄົນພາຍໃນບ້ານຂອງພວກເຮົາມີຄວາມສາມັກຄີກັນແລ້ວຈະເຮັດອັນໃດ ມັນກໍ່ໄດ້ຮັບຜົນ ສຳເລັດ ດັ່ງຄຳສຸພາສິດລາວເຮົາ ເວົ້າວ່າ: "ຄວາມສາມັກຄີ ເປັນບໍ່ເກີດແຫ່ງຜົນສຳເລັດ" ແລະ ອັນນີ້ ມັນແມ່ນລະບຽບການຈັດຕັ້ງປະຕິບັດ ວຽກງານ ທລຍ ກໍ່ຄືການພັດທະນາຊຸມຊົນ ເພື່ອແກ້ໄຂຄວາມ ທຸກຍາກ. ສະຫລຸບແລ້ວວ່າ: ການພັດທະຊົມຊົນ ພາຍໃຕ້ວຽກງານຂອງ ທລຍ ຕ້ອງເຮັດໃຫ້ຊຸມຊົນມີ ສ່ວນຮ່ວມ ແລະ ເຮັດ ໃຫ້ໝົດທຸກຄົນ ພາຍໃນບ້ານມີຄວາມສາມັກຄີ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ: 1 ຫາ 2 ຕົວຢ່າງ.

## ລະບຽບທີ 2: ຄວາມໂປ່ງໃສ



*ຖາມ:  ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?*

<u>**ຄວາມໝາຍຂອງຮູບ**</u>

ລະບຽບນີ້ ແມ່ນລະບຽບ ສໍາຄັນທີ່ສຸດຂອງ ທລຍ ເພາະວ່າແມ່ນການຕັດສິນກ່ຽວກັບການສືບຕໍ່ ໂຄງການ ຫຼື ບໍ່? ວິທີ ການເຮັດວຽກຂອງ ທລຍ ແມ່ນທຸກອັນຕ້ອງມີຄວາມໂປ່ງໃສ, ຂາວສະອາດ, ບໍ່ເຮັດແບບລັບໆ ລີ້ໆ, ເງິນຂອງໂຄງ ການຍ່ອຍກໍຕ້ອງສະແດງ ທີ່ ໃຫ້ທຸກຄົນໄດ້ຮັບຮູ້, ປະຊາຊົນເອງເປັນຜູ້ບໍລິຫານ ຄຸ້ມຄອງ ແລະກໍ່ ຕອ້ງເປີດເຜີຍໃຫ້ທຸກຄົນໄດ້ຮັບຮູ້, ໂດຍສະເພາະປະຊາຊົນກຸ່ມເປົ້າໝາຍຂອງໂຄງການທຸກຄົນຕ້ອງຮັບຮູ້ຂໍ້ມູນ-ຂ່າວສານຕ່າງໆຢ່າງເທົ່າທຽມກັນ, ມີການປຶກສາຫາລືແລະຖາມຕອບຫຼືຊີ້ແຈງຖ້າຊຸມຊົນກຸ່ມເປົ້າໝາຍເຫັນວ່າບໍ່ຈະ ແຈ້ງ ແລະ ທຸກອັນຕ້ອງມີ ການກວດສອບໄດ້. ເຊັ່ນດຽວກັບການຈັດຊື້-ຈັດ ຈ້າງໂຄງການຍ່ອຍຕ້ອງແມ່ນຊຸມຊົນ ຫຼື ທີມງານຂັ້ນບ້ານເປັນ ຜູ້ຮັບຜິດຊອບດໍາເນີນການທັງໝົດ.ດັ່ງທ່ານເຫັນຢູ່ໃນຮູບນີ້ຜູ້ຮັບຜິດຊອບເງິນໂຄງການຂອງ ກຸ່ມບ້ານໄດ້ນໍາສະເໜີກ່ຽວກັບງົບປະມານແລະການໃຊ້ຈ່າຍຕ່າງໆຂອງໂຄງການຍ່ອຍໃຫ້ແກ່ປະຊາຊົນພາຍໃນບ້ານ ຂອງຕົນໂດຍມີພະນັກງານ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມນໍາເຊິ່ງໃນການນໍາສະເໜີໄດ້ມີການສົນທະ ນາ ແລະຖາມຕອບກັນຖ້າຫາກມີອັນໃດບໍ່ຈະຈ່າງແຈ້ງທັງນີ້ທັງນີ້ເພື່ອສະແດງໃຫ້ເຫັນເຖິງຄວາມໂປ່ງໃສໃນການ ຈັດຕັ້ງປະຕິບັດວຽກງານ ທລຍ.

ຄັດເລືອກບໍລິສັດຜູ້ຮັບເໝົາມາຈັດຕັ້ງປະຕິບັດໂຄງການ ໂດຍໄດ້ຜ່ານຂະບວນການປະມູນ ຫຼື ຜ່ານຂັ້ນ ຕອນ ການຈັດຊື້-ຈັດຈ້າງທີ່ຖືກຕ້ອງບໍ? ເປັນໄປຕາມລະບຽບຫຼັກການຂອງໂຄງການບໍ? ບໍລິສັດທີຊະນະການປະ ມູນນັ້ນມີປະສົບການບໍ? ມີເຄື່ອງມືອຸປະກອນທີ່ຈະຈັດຕັ້ງປະຕິບັດບໍ?.

ການກໍ່ສ້າງໂຄງການໄດ້ມາດຕະຖານ ແລະ ມີຄຸນນະພາບ. ສະນັ້ນ, ຖ້າຫາກພໍ່ແມ່ປະຊາຊົນ ຫຼື ຊາວບ້ານເຮົາພົບເຫັນພຶດຕິກໍາທີ່ທ່ານຄິດວ່າມັນບໍ່ມີຄວາມໂປ່ງໃສ ທ່ານສາມາດ ໂທຫາເບີ 161 ທີ່ທຸກຄົນສາມາດ ໂທ ທຸກໆເວລາ ໃນໂມງລັດຖະການ ໂດຍບໍ່ໄດ້ເສັຍເງິນ ແຕ່ຢ່າງໃດ. ເພື່ອລາຍງານໃຫ້ ຫ້ອງການກອງທຶນຫຼຸດຜ່ອນ ຄວາມທຸກ ຍາກຂັ້ນສູນກາງໄດ້ໂດຍກົງ ຫຼື ລາຍງານໃຫ້ ຄະນະໄກ່ເກັ່ຍຢູ່ພາຍໃນບ້ານຂອງທ່ານ. ຈາກນັ້ນ, ພວກເຮົາຈະ ມາກວດ ສອບ. ສະນັ້ນ, ຖ້າບໍ່ຢາກໃຫ້ໂຄງການຖືກໂຈະຢູ່ບ້ານ ແລະ ຢູ່ກຸ່ມບ້ານຂອງພວກເຮົາ, ພວກເຮົາຕ້ອງເປັນຫູເປັນຕານໍາ ກັນເພື່ອກວດສອບພຶດຕິກໍາດັ່ງກ່າວ. ຖ້າມີການຕິດຕາມ ແລະ ກວດສອບຢ່າງ ຄັກແນ່ຕະຫຼອດຂອງການຈັດຕັ້ງປະຕິບັດໂຄງການແລ້ວມັນກໍ່ຈະເຮັດໃຫ້ໂຄງການຍ່ອຍໄດ້ຮັບປະສິດທິຜົນ, ພວກ ເຮົາກໍ່ຈະຫລຸດ ພົ້ນອອກຈາກຄວາມທຸກຍາກ ເພາະວ່າເງິນຄໍາທີ່ພັກ-ລັດນໍາມາລົງທຶນພັດທະນາສ້າງສາບ້ານ ແລະ ກຸ່ມ ບ້ານຂອງພວກເຮົາ ຈຶ່ງຈະບໍ່ຮົ່ວໄປໃສ ແລະ ຖືກນໍາມາພັດທະນາບ້ານ ແລະ ກຸ່ມ ບ້ານຂອງພວກເຮົາຢ່າງຖືກ ຕ້ອງ ແລະ ເໝາະສົມ. ສະເໜີໃຫ້ຜູ້ອໍານວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

## ລະບຽບທີ 3: ໃຫ້ສິດແກ່ແມ່ຍິງ



*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ຖາມຜູ້ເຂົ້າຮ່ວມວ່າ: ວຽກງານປະຈຳວັນຂອງຄອບຄົວນຶ່ງ ຊຶ່ງມີດັ່ງຕໍ່ໄປນີ້ ແມ່ນໃຜເປັນຜູ້ຮັບຜິດຊອບ ໃນໄລຍະຜ່ານມາ?

- ໄປເອົາຫລົວ ເອົາຟືນແມ່ນໃຜ?
- ໄປຕັກນ້ຳ ຕຳເຂົ້າແມ່ນໃຜ?
- ດູແລລູກເຕົ້າແມ່ນໃຜ?
- ຊັກເຄື່ອງຊັກຂອງແມ່ນໃຜ?
- ນຶ່ງເຂົ້າເປົ່າໄຟແມ່ນໃຜ?
- ວຽກຊຸມວຽກແຊວ ວຽກມ່ອຍວຽກຊີ່ນແມ່ນໃຜ?
- ໄປປະຊຸມບ້ານແມ່ນໃຜ? ວຽກວາງແຜນຂອງບ້ານແມ່ນໃຜ?

**<u>ຄວາມໝາຍຂອງຮູບ</u>**

ໃນເມື່ອຜູ້ຍິງ ຊຶ່ງເປັນຜູ້ຮັບພາລະສ່ວນໃຫ່ຍຂອງຄອບຄົວໄດ້ຮັບ ການພັດທະນາ ເທົ່າກັບວ່າ ຄອບຄົວ ກໍໄດ້ຮັບການພັດທະນາ,ຖ້າຫາກ ຄອບຄົວໄດ້ຮັບການພັດທະນາກໍ່ "ເທົ່າກັບວ່າບ້ານຂອງເຂົາເຈົ້າໄດ້ຮັບການພັດທະນາ ພ້ອມດຽວກັນສັງຄົມ ແລະ ປະເທດຊາດກໍ່ໄດ້ຮັບການພັດທະນາເຊັ່ນ ດຽວກັນ. ດັ່ງນັ້ນ ການມອບສິດໃຫ້ແກ່ຜູ້ຍິງເຂົ້າມາຮ່ວມໃນການວາງແຜນການພັດທະນາດັ່ງໃນຮູບ ນີ້ຈຶ່ງມີ

ຄວາມຈໍາເປັນ ແລະ ຈຶ່ງແມ່ນລະບຽບ ຫຼື ວິທີການຂອງ ທລຍ ເພື່ອສົ່ງເສີມໃຫ້ເຂົາ ເຈົ້າມີຄວາມເຂັ້ມແຂງມີຄວາມກ້າຫານໃນການອອກຄໍາຄິດຄໍາເຫັນ ຢູ່ໃນກອງປະຊຸມຕ່າງໆ ແລະ ຊຸກຍູ້ໃຫ້ເຂົາເຈົ້າ ກາຍເປັນຜູ້ນໍາ ຫຼື ເປັນຜູ້ຮັບຜິດຊອບວຽກງານ ໂດຍກົງໃນການພັດທະນາ. ເພື່ອສະແດງເຖິງບົດບາດ ຄວາມສໍາຄັນຂອງຜູ້ຍິງ, ສະນັ້ນ ທຸກໆກອງປະຊຸມພາຍໃຕ້ວຽກງານ ທລຍ ທີ່ຈັດຂຶ້ນຢູ່ຂັ້ນບ້ານ ຢ່າງໜ້ອຍຜູ້ເຂົ້າຮ່ວມ 40% ຂອງຈໍານວນຜູ້ເຂົ້າຮ່ວມທັງໝົດຕ້ອງແມ່ນຜູ້ຍິງ, ນອກຈາກ ນັ້ນ ໃນເວລາຈັດລຽງບູລິມະສິດຄວາມຕ້ອງການຢູ່ຂັ້ນ ບ້ານນັ້ນ ຢ່າງໜ້ອຍ 3 ໃນ 5 ບູລິມະ ສິດທາອິດ ຕ້ອງຄັດເລືອກມາຈາກກຸ່ມແມ່ຍິງ. ທຸກໆການຈັດຕັ້ງຕ້ອງປະກອບໃຫ້ມີຜູ້ຍິງ.

ສະເໜີໃຫ້ຜູ້ອໍານວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

*ບໍ່ວ່າ ກິດຈະກໍາໃດໆຂອງ ທລຍ ແມ່ນຈະເວົ້າເຖິງ ບົດບາດຍິງ-ຊາຍ, ຊົນເຜົ່າ, ຜູ້ດ້ອຍໂອກາດ ຫຼື ເພດໄວ*

## ລະບຽບທີ 4: ຄວາມສະເໝີພາບ





*ຖາມ: ຮູບນີ້ ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

**ຄວາມໝາຍຂອງຮູບ**

**ຮູບທີ 1:** ມີຄົນ 5 ຄົນນັ່ງໃນຫ້ອງປະຊຸມຂອງບ້ານ ກໍາລັງວາງແຜນຮ່ວມກັນ,ແຕ່ຍັງມີ ປະຊາຊົນຜູ້ທຸກຍາກໃນບ້ານຈໍານວນໜຶ່ງບໍ່ໄດ້ເຂົ້າຮ່ວມໃນການວາງແຜນພັດທະນາບ້ານນໍາ,ເຊິ່ງພວກເຂົາໄດ້ຢືນເບິ່ງຄົນອື່ນກໍາລັງວາງແຜນຮ່ວມກັນຢູ່. ສໍາລັບກອງທຶນຫຼຸດຜ່ອນຄວາມທຸກຍາກ ຄວາມສະເໝີພາບ ແມ່ນການເປີດໂອກາດໃຫ້ທຸກຄົນ (ບໍ່ວ່າຈະເປັນຄົນທຸກ, ຄົນຮັ່ງ, ເຖົ້າແກ່ເດັກນ້ອຍ ຫຼື ແມ່ຍິງ ຜູ້ຊາຍ) ໄດ້ເວົ້າໄດ້ວ່າ ໄດ້ມີການປຶກສາຫາລື ສະແດງຄໍາຄິດຄໍາເຫັນໃນສິ່ງທີ່ຕົນຕ້ອງການ ແລະແຜນນັ້ນກໍ່ຕ້ອງມີຄວາມ-ເຫັນດີເຫັນພ້ອມຈາກໝົດທຸກຄົນ,ໃນການຕັດສິນບັນຫາໃດໜຶ່ງນັ້ນ. ພວກເຮົາຕ້ອງການຈໍານວນຜູ້ສະໜັບສະໜູນຫຼາຍກວ່າເຄິ່ງໜຶ່ງ ຈຶ່ງສາມາດເວົ້າໄດ້ວ່າການຕັດສິນບັນຫາແມ່ນມີຄວາມສະເໝີພາບ.

**ຮູບທີ 2 :**

ປະຊາຊົນໃນບ້ານເຂົ້າມາມີສ່ວນຮ່ວມນຳກັນໃນການວາງແຜນພັດທະນາບ້ານ,ຮູບພາບນີ້ສະແດງເຖິງການເປີດໂອກາດ ໃຫ້ ທຸກຊັ້ນຄົນແລະຜູ້ດ້ອຍໂອກາດໃນບ້ານລວມທັງແມ່ຍິງ, ຜູ້ຊາຍ, ຊົນເຜົ່າ, ແມ່ຮ້າງນາງໝ້າຍ, ຜູ້ເສັຽອົງຄະ....ໄດ້ເວົ້າໄດ້ວ່າ ແລະ ສະເໜີໃນສິ່ງທີ່ເຂົາເຈົ້າຕ້ອງການເພື່ອໃຫ້ອອກມາເປັນແຜນການພັດທະນາບ້ານຂອງພວກເຮົາໂດຍແມ່ນພວກເຮົາເປັນຜູ້ຕົກລົງເອກະພາບນຳກັນ. ເປັນຫຍັງຈິ່ງຕ້ອງມີຄວາມສະເໝີພາບກັນໃນການຕັດສິນບັນຫາ?

- ເພື່ອໃຫ້ໝົດທຸກຄົນ ເຫັນໄດ້ໃນສິ່ງທີ່ຈະເກີດຂຶ້ນພາຍໃນບ້ານເຮົາ
- ເພື່ອຫຼີກລ້ຽງບໍ່ໃຫ້ເກີດການຜິດຖຽງກັນຕາມພາຍຫຼັງ ຍ້ອນອ້າງວ່າ "ຂ້ອຍບໍ່ຮູ້?, ຂ້ອຍບໍ່ໄດ້ເຂົ້າຮ່ວມ ແລະ ຂ້ອຍບໍ່ຮັບຜິດຊອບນຳ." ດັ່ງນີ້ເປັນຕົ້ນ
- ເພື່ອໃຫ້ທຸກຄົນໃນບ້ານໄດ້ຮັບຜົນປະໂຫຍດສູງສຸດຮ່ວມກັນ ແລະເພື່ອໃຫ້ການພັດທະນາສອດຄ່ອງກັບຄວາມຕ້ອງການຂອງຄົນສ່ວນຫຼາຍພາຍໃນບ້ານ

ສະນັ້ນ, ການຕັດສິນບັນຫາຢ່າງສະເໝີພາບ ຄືການນຳສັນຕິສຸກ ແລະ ປະ ໂຫຍດສູງສຸດມາສູ່ໝົດທຸກຄົນພາຍໃນບ້ານເຮົາ. ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ.

*ບໍ່ມີໃຜຄົນໃດ ທີ່ຈະຕ້ອງຖືກຍົກເວັ້ນການມີສ່ວນຮ່ວມ*

## ລະບຽບທີ 5: ການວາງແຜນເລີ່ມແຕ່ຂັ້ນບ້ານ



*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ພວກເຮົາມາຕັ້ງຄຳຖາມນຳກັນວ່າ ເປັນຫຍັງກອງທຶນຫຼຸດຜ່ອນຄວາມທຸກຍາກ ຈຶ່ງມີລະບຽບທີ່ວ່າ

ການວາງແຜນຕ້ອງເລີ່ມຈາກຂັ້ນບ້ານຂຶ້ນມາ? ກ່ອນທີ່ຈະຕອບຄຳຖາມດັ່ງ ກ່າວນີ້, ກ່ອນອື່ນໝົດພວກເຮົາມາທຳຄວາມເຂົ້າໃຈນຳກັນວ່າ ການພັດທະນາຊົນນະບົດແມ່ນຫຍັງ?

**<u>ຄວາມໝາຍຂອງຮູບ</u>**

ການພັດທະນາຊົນນະບົດ ແມ່ນການພັດທະນາຢູ່ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ. ການພັດທະນາ ແມ່ນການເຮັດໃຫ້ດີຂຶ້ນແມ່ນການພັດທະນາພື້ນຖານໂຄງລ່າງ ແລະ ການພັດທະນາຄົນໄປພ້ອມໆກັນ ຄຳວ່າຄົນກໍ່ແມ່ນພໍ່ແມ່ປະຊາຊົນເຮົາເອງ. ພໍ່ແມ່ປະຊາຊົນເຮົາເປັນຜູ້ຮູ້ດີ ກວ່າໝູ່ກ່ຽວກັບສະພາບຕົວຈິງຂອງບ້ານພວກເຮົາ ວ່າອັນໃດແມ່ນທ່າແຮງຢູ່ພາຍໃນບ້ານ? ອັນໃດແມ່ນສາເຫດຂອງຄວາມທຸກຍາກ? ອັນໃດແມ່ນກາລະໂອກາດ? ອັນໃດແມ່ນຄວາມມຸ່ງໝາດປາດຖະໜາໃນການພັດທະນາບ້ານຂອງພວກເຮົາ?. ສະນັ້ນ, ຖ້າຫາກການວາງແຜນໄດ້ມີການລິເລີ່ມຈາກຂັ້ນບ້ານຂຶ້ນມາ, ພໍ່ແມ່ປະຊາຊົນພາຍໃນບ້ານໄດ້ມີສ່ວນຮ່ວມ ແລະ ເປັນຜູ້ກຳນົດທິດທາງການພັດທະນາໃນ ແຕ່ລະໄລຍະໂດຍເຂົາເຈົ້າເອງຈະເຮັດໃຫ້ແຜນການດັ່ງກ່າວແທດເໝາະກັບສະພາບຕົວເປັນຈິງ, ສອດຄ່ອງກັບຄວາມມຸ່ງໝາດປາຖະໜາ ແລະ ບຸລິມະສິດຄວາມຕ້ອງທີ່ແທ້ຈິງ ຂອງພໍ່ແມ່ປະຊາຊົນແຕ່ລະບ້ານ. ດັ່ງນັ້ນຈະເຮັດໃຫ້ພໍ່ແມ່ປະຊາຊົນເປັນເຈົ້າການໃນການຈັດຕັ້ງປະຕິບັດໂຄງການ, ເປັນເຈົ້າການໃນການປົກປັກຮັກສາໂຄງການ ແລະ ເຮັດໃຫ້ໂຄງການມີການນຳໃຊ້ໄດ້ຢ່າງຍາວນານ ແລະ ມີປະສິດທິຜົນສູງສຸດ. ຫລັງຈາກ ການວາງແຜນຂັ້ນບ້ານສຳເລັດແລ້ວ ຕົວແທນແຕ່ລະບ້ານ ພາຍໃນກຸ່ມບ້ານຂອງເຮົາ ຈະໄດ້ໄປ ຮ່ວມການວາງແຜນພັດທະນາກຸ່ມບ້ານ.

ຜ່ານຂັ້ນຕອນຕ່າງໆທີ່ໄດ້ກ່າວມານີ້ ຈະໄດ້ແຜນການທີ່ມີຄວາມເປັນເອກະພາບ ແລະ ມີຄວາມ ແທດເໝາະກັບຄວາມເປັນຈິງ ນອກຈາກນັ້ນ ຍັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງ ຂັ້ນບ້ານ ແລະ ຂັ້ນກຸ່ມບ້ານເພື່ອໃຫ້ມີຄວາມຮູ້ໃນການວາງແຜນ, ມີຄວາມຮູ້ໃນ ການກຳນົດທິດທາງການພັດທະນາບ້ານແລະກຸ່ມບ້ານຂອງເຂົາເຈົ້າໃນອານາຄົດ. ຈຶ່ງຈະສາມາດເຮັດ ໃຫ້ບ້ານ ກາຍເປັນຫົວໜ່ວຍພັດທະນາ ຕາມເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງທີ່ 9 ຂອງພັກປະຊາຊົນປະຕິວັດລາວ.

**ການວາງແຜນໃນແຕ່ລະຂັ້ນ ແມ່ນຢາກໄດ້ໝາກຜົນລຸ່ມນີ້:**

ການວາງແຜນຂັ້ນບ້ານ ແມ່ນເພື່ອຕອບຄຳຖາມວ່າ ບ້ານເຮົາທຸກຍາກຍ້ອນ ຫຍັງ?, ສາເຫດແມ່ນຫຍັງ? ຈະແກ້ໄຂສາຍເຫດຂອງບັນຫາຄືແນວໃດ? ບ້ານຂອງພວກເຮົາຈະສາມາດເຮັດອັນໃດໄດ້ກ່ອນ ໂດຍບໍ່ລໍຖ້າກາຍຊ່ວຍເຫລືອຈາກພາຍນອກ.ການວາງແຜນພັດທະນາກຸ່ມບ້ານຈະເປັນການເບິ່ງບັນຫາ ລວມຂອງການພັດທະນາກຸ່ມບ້ານ ແມ່ນຈະໄດ້ຮູ້ວ່າບ້ານໃດມີຄວາມຈຳເປັນກ່ອນ, ໂຄງການອັນໃດ ຈະນຳຜົນປະໂຫຍດມາສູ່ຫລາຍບ້ານ, ຈະໄດ້ແຜນພັດທະນາກຸ່ມບ້ານໂດຍລວມ ສຳລັບ 5 ປີ.

ກອງປະຊຸມປະສານງານການວາງແຜນຂັ້ນເມືອງແມ່ນຈະໄດ້ແຜນພັດທະນາຂັ້ນກຸ່ມບ້ານຖືກບັນຈຸເຂົ້າ ໃນແຜນພັດທະນາຂອງເມືອງ,ຈະໄດ້ປຶກສາຫາລືນຳຂະແໜງການທີ່ກ່ຽວຂ້ອງ ແລະ ໂຄງການພັດທະນາ ອື່ນໆວ່າຈະຮ່ວມໄມ້ຮ່ວມມືກັນຄືແນວໃດ? ໃຜຈະຮັບຜິດ ຊອບອັນໃດ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ.

## ລະບຽບທີ 6: ໃຫ້ໂອກາດແກ່ຜູ້ທຸກຍາກ



*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ຄວາມໝາຍ ແລະ ຄວາມສຳຄັນຂອງການ "ໃຫ້ໂອກາດແກ່ຜູ້ທຸກຍາກ"

ແມ່ນເພື່ອສົ່ງເສີມໃຫ້ຜູ້ທຸກຍາກໄດ້ມີໂອກາດສະເໜີຄວາມຄິດຂອງຕົນ ຕໍ່ການພັດທະນາຂອງບ້ານ. ສຳລັບໂຄງການ ທລຍ, ຜູ້ທຸກຍາກ, ຜູ້ດ້ອຍໂອ ກາດ ແລະ ຊົນເຜົ່າ ຖືໄດ້ວ່າແມ່ນກຸ່ມເປົ້າໝາຍຕົ້ນຕໍສຳລັບໃຫ້ການຊ່ວຍເຫຼືອ. ພວກເຂົາເປັນບຸກຄົນສຳຄັນກໍ່ເພາະວ່າ ເປັນຜູ້ທີ່ພົບກັບສະພາບຄວາມທຸກຍາກກ່ວາໝູ່ໝົດ ເຊິ່ງເປັນຄວາມທຸກຍາກທີ່ເກີດຈາກການບໍລິການດ້ານສັງຄົມ ແລະ ເສດຖະ

ກິດບໍ່ເຂົ້າເຖິງພວກເຂົາ. ຕົວຢ່າງ: ພວກເຂົາຕ້ອງໄປຕັກນ້ຳໃນໄລຍະທາງທີ່ໄກຫຼາຍກິໂລແມັດ, ຫຼື ບ້ານບໍ່ມີສູນປິ່ນປົວສຸຂະພາບ, ຫຼື ບໍ່ມີຖະໜົນຫົນທາງເຂົ້າເຖິງບ້ານ ແລະ ອື່ນໆ.

**<u>ຄວາມໝາຍຂອງຮູບ</u>**

ຮູບພາບນີ້, ບ້ານທີ່ຢ ູແຄມທາງໃຫຍ່, ມີທາງສະດວກສະບາຍ, ມີໄຟຟ້າໃຊ້, ມີລະບົບນ້ຳລິນນ້ຳສະອາດ, ມີໂຮງຮຽນ, ລັກສະນະບ້ານມີຄວາມສີວິໄລ. ສ່ວນບ້ານຢູ່ຝາກນ້ຳເບື້ອງນັ້ນບໍ່ມີຖະໜົນຫົນທາງ ເຂົ້າບ້ານຍຸ້ງຍາກລຳບາກ, ສະພາບຂອງບ້ານຍັງທຸກຍາກ, ບໍ່ມີລະບົບນ້ຳສະອາດ, ບໍ່ມີໄຟຟ້າເຂົ້າບ້ານ, ບໍ່ມີໂຮງຮຽນ ສະນັ້ນ, ເຮັດແນວໃດບ້ານດັ່ງກ່າວນີ້ ຈະໄດ້ຖືກພັດທະນາໃຫ້ມີຄວາມສີວິໄລ ຄືກັນກັບບ້ານເພິ່ນ. ເຮັດແນວໃດຜູ້ທຸກຍາກບ້ານທຸກຍາກ ຈຶ່ງຈະຂ້າມຜ່ານຄວາມທຸກຍາກໄປໄດ້ ສະນັ້ນ, ລະບຽບຂອງ ທລຍ ແມ່ນສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ທຸກຍາກ ຫລີກລຽງຄຳເວົ້າທີ່ວ່າ ຍາມໃດກໍລໍຖ້າການຊ່ວຍເຫລືແຈາກພາກສ່ວນອື່ນ ເພາະວ່າຖ້າຫາກລໍຖ້າການຊ່ວຍເຫຼືອຈາກຜ ູອື່ນ ບໍ່ຮູ ້ວ່າເວລາໃດເຂົາເຈົ້າຈະມາຊ່ວຍ ຫຼື ຖ້າມາຊ່ວຍຈະຊ່ວຍເທົ່າໃດ ແລະ ຖ້າບໍ່ມາຊ່ວຍ

ເລີຍຈະເປັນແນວໃດ? ສະຫລຸບແລ້ວ ທລຍ ພວກເຮົາຕ້ອງສ້າງໃຫ້ເຂົາເຈົ້າມີຄວາມເຂັ້ມແຂງ ຈົນໃຫ້ເຂົ້າເຈົ້າຂ້າມຜ່ານບັນຫາ ຫຼື ລຸດພົ້ນຈາກຄວາມທຸກຍາກໄດ້.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

## ລະບຽບທີ 7: ກຸ່ມຕົນເອງ



*ຖາມ: ຮູບນີ້ ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?*

ການກຸ້ມຕົນເອງ, ເພິ່ງຕົນ ແລະ ສ້າງຄວາມເຂັ້ມແຂງດ້ວຍ ຕົນເອງແມ່ນຄວາມປາດຖະໜາດີ ຂອງ ພັກ-ລັດຖະບານເຮົາ. ດັ່ງນັ້ນ ທລຍ 2 ຈຶ່ງເອົາມາເປັນລະບຽບໜຶ່ງ ໃນການຈັດຕັ້ງປະຕິບັດວຽກງານ ທລຍ ໂດຍຈະເລີ່ມການຊັກຊວນ ໃຫ້ທຸກໆຄົນພາຍໃນບ້ານເຊັ່ນ: ຜູ້ທຸກຍາກ, ຜູ້ດ້ອຍໂອກາດອື່ນໆ (ຜູ້ເສຍອົງຄະ, ຜູ້ເຖົ້າຜູ້ແກ່, ແມ່ຮ້າງນາງໝ້າຍ, ອື່ນໆ) ແລະ ຊົນເຜົ່າໃຫ້ເຂົາເຈົ້າສາ ມາດເພິ່ງພາ ໂຕເອງໄດ້.

ໃນເບື້ອງຕົ້ນ ແມ່ນເລີ່ມຈາກເຊີນໃຫ້ຊາວບ້ານເຂົ້າຮ່ວມກ່ອນ, ຈາກນັ້ນຊຸກຍູ້ ໃຫ້ເຂົາເຈົ້າຮູ້ຈັກປະກອບຄຳຄິດຄຳເຫັນ ໃສ່ໃນວຽກງານຕ່າງໆຂອງບ້ານ, ເຂົ້າຮ່ວມ ໃນການຕັດສິນບັນຫາຕ່າງໆຂອງ ບ້ານ ຫຼື ຖ້າທຽບໃສ່ລະດັບບ້ານກໍ່ເຊັ່ນ ດຽວກັນ ຖ້າຢາກໃຫ້ບ້ານມີການພັດທະນາບ້ານເຂົາເຈົ້າຕ້ອງເປັນ ເຈົ້າຕົນເອງ, ຮູ້ຈັກຊ່ວຍເຫລືອຕົນເອງ ຫລີກເວັ້ນການຄອງຄອຍຖ້າຮັບເອົາແຕ່ການຊ່ວຍ ເຫລືອຈາກ ຜູ້ອື່ນ ຫຼື ຈາກພັກ-ລັດຂັ້ນເທິງ. ຖ້າເປັນແນວນັ້ນພວກເຮົາຈະບໍ່ມີ ໂອກາດພັດທະນາຈັກເທື່ອ.

ສະນັ້ນ, ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະທີ່ 2 ຈຶ່ງມີວິທີໃໝ່ດັ່ງທີ່ໄດ້ອະ ທິບາຍໃນສອງຮູບນີ້: ຮູບຢູ່ເບື້ອງຂວາມືຂອງທ່ານ ແມ່ນວິທີເກົ່າໃນການພັດທະນາ ກໍ່ຄືຜູ້ໃດຢາກກິນປາ ແມ່ນເອົາປາ ໃຫ້, ເທື່ອໜ້າຢາກກິນປາກໍ່ ເອົາປາໃຫ້ຕື່ມ ແລະ ເຮັດແນວນີ້ຕະລອດໄປ. ໝາຍຄວາມວ່າບໍ່ສິ້ນສຸດຈັກ ເທື່ອ ແລະ

ໃນທີ່ສຸດເຂົາເຈົ້າກໍ່ຕົກຢູ່ໃນສະ ພາບຄືເກົ່າ ກໍ່ຄືລໍຖ້າແຕ່ການຊ່ວຍເຫລືອຊຶ່ງເຫັນວ່າເປັນວິທີ ທີ່ບໍ່ຖືກຕ້ອງ.

ສໍາລັບ ຫລຍ 2 ນີ້ ໄດ້ນໍາໃຊ້ວິທີການຄືກັບຮູບຢູ່ເບື້ອງຊ້າຍມືຂອງທ່ານ ກໍ່ຄື ສອນວິທີຕຶກເບັດ, ໃຫ້ສອນວິທີວ່າເຮັດແນວໃດຈຶ່ງຈະໄດ້ປາ. ຈາກນັ້ນ, ຈະໄດ້ ກິນປາຫຼືບໍ່ແມ່ນເຮົາເອງ. ສະນັ້ນ, ຖ້າຢາກ ໄດ້ປາພວກເຮົາກໍຕ້ອງມີຄວາມພະຍາຍາມ ແລະ ອົດທົນ ເພື່ອວ່າໃນຕໍ່ໜ້າພວກເຮົາຈະສາມາດກຸ້ມ ຕົນເອງ, ສາມາດເພິ່ງຕົນເອງ ແລະ ຢືນຢູ່ລໍາແຄ່ງຂອງຕົນເອງໄດ້.

**<u>ຄວາມໝາຍຂອງຮູບ</u>**

ກຸ້ມຕົນເອງ ແມ່ນການຄົ້ນຄິດຄວາມຝັນ ແລ້ວເຮັດໃຫ້ຄວາມຝັນດັ່ງກ່າວປະກົດຜົນເປັນຈິງ. ສະຫຼຸບແລ້ວ ມັນແມ່ນ "ການຄິດ ແລະ ລົງມືປະຕິບັດ". ກຸ້ມຕົນເອງ ແມ່ນປັດໃຈພື້ນຖານອັນສໍາຄັນໜຶ່ງຂອງການແກ້ໄຂຄວາມທຸກຍາກ ເພາະວ່າການຊ່ວຍເຫຼືອຈາກຄົນອື່ນ ແມ່ນເກີດຂຶ້ນເປັນບາງຄັ້ງຄາວ ແລະ ບໍ່ເຂົ້າໃຈຢ່າງເລິກເຊິ່ງຕໍ່ບັນຫາຂອງພວກເຮົາ. ສະນັ້ນ, ຮຽນຮູ້ກຸ້ມຕົນເອງ ຫຼື ຊ່ວຍຕົນເອງໄປເທື່ອລະກ້າວຕາມທ່າແຮງຂອງຕົນ ຈຶ່ງເປັນທາງເລືອກທີ່ດີທີ່ສຸດໃນການແກ້ໄຂບັນຫາຢ່າງທັນການ ແລະ ຖາວອນ.

ອັນໃດຈຶ່ງເອີ້ນວ່າ ບໍ່ກຸ້ມຕົນເອງ?

- ມີແຕ່ຄິດຢາກໄດ້ແຕ່ບໍ່ລົງມືເຮັດ ຫຼື ລົງມືເຮັດໃນໄລຍະໜຶ່ງ ແລ້ວຍົກເລີກ
- ບໍ່ມີຫົວຄິດປະດິດສ້າງຫາສິ່ງໃໝ່ໆທີ່ດີກວ່າ ໝາຍວ່າ ລົງມືເຮັດແຕ່ອັນ ເກົ່າເປັນເວລາຫຼາຍ 10-20 ປີ ໂດຍບໍ່ມີການປ່ຽນແປງ
- ບໍ່ມີຄວາມອົດທົນຕໍ່ການແກ້ໄຂຄວາມຫຍຸ້ງຍາກ. ຍົກຕົວຢ່າງ: ບ້ານ ກ ຢາກປຸກສ້າງໂຮງຮຽນ, ແຕ່ວ່າພາຍໃນບ້ານບໍ່ມີວັດສະດຸກໍ່ສ້າງພຽງພໍ. ສະ ນັ້ນ, ທຸກຄົນພາຍໃນບ້ານ ຈຶ່ງຍົກເລີກຄວາມຕັ້ງໃຈ. ອັນນີ້ ຖືໄດ້ວ່າຂາດແນວຄິດກຸ້ມຕົນເອງ. ອັນທີ່ຈິງ ບ້ານ ກ ມີຫຼາຍຊ່ອງທາງແກ້ໄຂບັນຫາດັ່ງ ກ່າວເຊັ່ນ: ອາດຈະໄປເຈລະຈາກັບບ້ານໃກ້ຄຽງທີ່ສາມາດໜອງວັດຖຸໄດ້ ຫຼື ອາດຈະໄປປຶກສາຫາລືກັບຫ້ອງການເມືອງ ແລະ ອື່ນໆກໍ່ໄດ້.ມີແນວຄິດເອື່ອຍອີງ ແລະ ລໍຖ້າການຊ່ວຍເຫຼືອຄົນອື່ນ.

## ລະບຽບທີ 8: ຄວາມເປັນເຈົ້າຂອງໂຄງການ



*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ຄຳວ່າຄວາມເປັນເຈົ້າຂອງໂຄງການ ໝາຍເຖິງການພັດທະນາ ທີ່ຂັບເຄື່ອນໂດຍຊຸມຊົນເອງ ຫຼື ການຈັດ ຕັ້ງປະຕິບັດໂຄງການຕ້ອງ ແມ່ນພໍ່ແມ່ປະຊາຊົນເອງເປັນຜູ້ເຮັດ ຊຶ່ງການຈັດຕັ້ງປະຕິບັດໂຄງການນີ້ ລວມມີການວາງແຜນເອງ, ການຕັດສິນໃຈເອງ, ການຄຸ້ມຄອງເງິນ ໂຄງການຍ່ອຍຂອງກຸ່ມບ້ານເອງ, ດຳເນີນຂັ້ນຕອນການ ຈັດຊື້-ຈັດຈ້າງເອງທັງໝົດ. ແຕ່ຖ້າຫາກມີກໍລະນີທີ່ພະນັກງານຂອງກອງທຶນຫລຸດ ຜ່ອນຄວາມທຸກຍາກມາເຮັດແທນຊຸມຊົນແລ້ວ ຄຳວ່າຄວາມເປັນເຈົ້າຂອງໂຄງການ ແມ່ນບໍ່ຖືກຕ້ອງ ຕໍ່ກັບລະບຽບຂອງ ທລຍ. ຄືດັ່ງ 4 ຮູບນີ້ ແມ່ນພໍ່ແມ່ປະຊາຊົນເປັນເຈົ້າການໃນການໃນການຈັດຕັ້ງປະຕິບັດໂຄງການຍອ່ຍ ຢ່າງຕັ້ງໜ້າ.

**<u>ຄວາມໝາຍຂອງຮູບ</u>**

**ຮູບ 1:** ການປະຊຸມກັນຂັ້ນກຸ່ມບ້ານໃນການຈັດການປະມູນໂຄງການຍ່ອຍຂອງກຸ່ມບ້ານພວກເຂົາໂດຍມີທີມງານຈັດຊື້ຈັດຈ້າງຂອງບ້ານ, ທລຍ ເມືອງຜູ້ຊ່ວຍແນະນຳຂັ້ນຕອນໃຫ້ແກ່ຊຸມຊົນ ເພື່ອໃຫ້ເຂົາເຈົ້າດຳເນີນຖືກຕ້ອງຕາມຂັ້ນຕອນຂອງ ທລຍ, ພະນັກງານຈາກຂະແໜງການອອ້ມຂ້າງເມືອງ ສາມາດເຂົ້າຮ່ວມ ເພື່ອສັງເກດການ ຮັບປະກັນຄວາມໂປ່ງໃສ ແລະ ໃຫ້ສາມາດຄັດເລືອກເອົາຜູ້ສະໜອງ/ຜູ້ບໍລິການທີ່ມີລາຄາຕ່ຳ ແຕ່ໄດ້ຄຸນນະພາບມາ, ເວົ້າລວມແລ້ວບ້ານທີ່ໄດ້ຮັບຜົນປະໂຫຍດເອງເປັນເຈົ້າການໃນການປະຕິບັດຂັ້ນຕອນການປະມູນ.

**ຮູບ 2:** ແມ່ນຜູ້ສະໜອງເຄື່ອງ ໄດ້ເອົາເຄື່ອງຂອງ ແລະ ວັດສະດຸອຸປະກອນໃນການກໍ່ສ້າງ ມາສົ່ງໃຫ້ບ້ານ, ທີມງານຈັດຊື້ຂອງບ້ານໄດ້ກວດກາເອົາເຄື່ອງ ເພື່ອໃຫ້ຖືກຕ້ອງ ແລະ ຄົບຕາມຈຳນວນທີ່ສັ່ງຊື້.

**ຮູບ 3:** ແມ່ນຄະນະຮັບຜິດຊອບຂັ້ນບ້ານໄດ້ຕິດຕາມ ແລະ ຄຸ້ມຄອງການກໍ່ສ້າງໂຮງຮຽນປະຖົມຂອງກຸ່ມບ້ານເຂົາເຈົ້າພ້ອມທັງຮ່ວມກັນປະກອບສ່ວນດ້ານແຮງງານ.

**ຮູບ 4:** ພະນັກງານ ແລະ ຄູອາຈານກຳລັງເຮັດອານາໄມໂຮງຮຽນ, ສ່ວນພໍ່ແມ່ນັກຮຽນແມ່ນກຳລັງບູລະນະສ້ອມ ແປງປະຕູໂຮງຮຽນທີ່ຖືກເປ່ພ.

ຈຸດປະສົງຂອງການສ້າງລະບຽບນີ້ຂຶ້ນມາ ແມ່ນເພື່ອໃຫ້ຊຸມຊົນ ຫຼື ພໍ່ແມ່ປະຊາຊົນພວກເຮົາມີຄວາມ ເຂັ້ມແຂງ ແລະ ໃນຕໍ່ໜ້າກໍ່ຈະສາມາດຮັດຜິດຊອບການພັດທະນາຊຸມຊົນຂອງພວກເຮົາໄດ້ ແລະ ສາມາດແກ້ໄຂຄວາມທຸກຍາກໄດ້ດ້ວຍໂຕເອງ. ອີກດ້ານນໜຶ່ງເພື່ອໃຫ້ຊຸມຊົນຮູ້ຈັກບູລະນະແລະບຳລຸງຮັກສາໂຮງຮຽນດ້ວຍພວກເຂົາເອງຖ້າຫາກໂຄງການສິ້ນສຸດ.ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

## ລະບຽບທີ 9: ການລົງທຶນຕ້ອງຄຸ້ມຄ່າ

**ທລຍ 2**

**ລະບຽບການພັດທະນາຊຸມຊົນ ຂໍ້ທີ່ 9:**
**ການລົງທຶນຕ້ອງຄຸ້ມຄ່າ**




*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານ ເຂົ້າໃຈແນວໃດ?*

ໃນຮູບດັ່ງກ່າວນີ້ ພວກເຮົາສັງເກດເຫັນໄດ້ວ່າເປັນການລົງທຶນທີ່ແຕກຕ່າງກັນ ໃນ 2 ຮູບ, ແຕ່ແມ່ນໂຄງການຄ້າຍຄືກັນ. ແມ່ນ ການສ້າງ ໂຮງຮຽນສອງຫລັງ.

**<u>ຄວາມໝາຍຂອງຮູບ</u>**

**ຮູບທີ່ 1**: ໂຮງຮຽນຫຼັງນີ້ ແມ່ນໃຊ້ງົບປະມານເທົ່າກັບຫລັງທີ່ສອງ, ມີ 1 ຫ້ອງຮຽນ ຄື ຫ້ອງ ປໍ 1 ຜູ້ທີ່ໄດ້ຮັບຜົນປະໂຫຍດ (ນັກຮຽນ) ແມ່ນມາຈາກບ້ານດຽວ , ນັກຮຽນຫ້ອງ ປໍ 1 ແລະ ປໍ 2 ແມ່ນຮຽນຫ້ອງຄວບ .

**ຮູບທີ 2**: ໂຮງຮຽນຫຼັງນີ້ ແມ່ນ ນໍາໃຊ້ງົບປະມານເທົ່າຂອງົບປະມານຫຼັງ ໂຮງຮຽນຮູບທີ 1 ແຕ່ໂຮງຮຽນຫຼັງນີ້ມີ 3 ຫ້ອງຮຽນ ຫ້ອງ ປໍ 1,ປໍ 2 ແລະ ປໍ 3 , ຜູ້ໄດ້ຮັບຜົນປະໂຫຍດ ຫຼື ນັກຮຽນກໍ່ມາຈາກຫລາຍບ້ານ, ນັກຮຽນຈະບໍ່ໄດ້ຮຽນຫ້ອງຄວບ. ສະນັ້ນ, ລະບຽບການດັ່ງກ່າວນີ້ ຈຶ່ງເປັນລະບຽບໜຶ່ງທີ່ສໍາຄັນຂອງ ທລຍ 2 ທັງນີ້ເພື່ອຮັບປະກັນໃຫ້ການລົງທຶນຂອງ ທລຍ ເປັນການລົງທຶນທີ່ຄຸ້ມຄ່າ ແລະ ມີປະສິດທິຜົນສູງ.

ຖ້າຫາກວ່າບໍ່ເອົາໃຈໃສ່ໃນເລື່ອງການລົງທຶນທີ່ກຸ້ມຄ່າແລ້ວອັນໃດຈະເກີດຂຶ້ນ?

ຜົນເສຍທີ່ຈະເກີດຂຶ້ນຕາມມາ ລວມມີ:

ໂຄງການກໍ່ສ້າງບໍ່ສໍາເລັດ ເພາະ ວ່າໃຊ້ຈ່າຍເງິນໂຄງການແບບຟູມ ເຟືອຍ.

ມີພຽງກຸ່ມໃດກຸ່ມໜຶ່ງໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ຮ້າຍແຮງໄປກວ່ານັ້ນ ມັນຈະສົ່ງຜົນໃຫ້ເກີດຄວາມແຕກແຍກທາງດ້ານຄວາມສາມັກຄີ ເພາະວ່າຄົນກຸ່ມໜຶ່ງໄດ້ຮັບຜົນປະໂຫຍດ, ແຕ່ອີກກຸ່ມໜຶ່ງ ຊໍ້າພັດບໍ່ໄດ້. ຄວາມທຸກຍາກ ຍັງມີຄືເກົ່າ. ໂຄງການບໍ່ມີຄຸນນະພາບເທົ່າທີ່ຄວນ

ສະເໜີໃຫ້ຜູ້ອໍານວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

*ຊັບພະຍາກອນ ແລະ ການຊ່ວຍເຫລືອຂອງ ທລຍ ຈະຕ້ອງຖືກນຳໃຊ້ເພື່ອເປັນຜົນປະໂຫຍດໃຫ້ແກ່ຄົນສ່ວນໃຫຍ່ ໂດຍສະເພາະປະຊາຊົນຢູ່ໃນບ້ານ ແລະ ກຸ່ມບ້ານທຸກຍາກທີ່ສຸດ*

## ລະບຽບທີ 10: ການກຳນົດທິດທາງທີ່ຖືກຕ້ອງ




*ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?*

ລະບຽບການຈັດຕັ້ງປະຕິບັດວຽກງານຂອງ ທລຍ ລະບຽບນີ້ຄວາມໝາຍວ່າ "ການພັດທະນາຊຸມ ຊົນຕາມຮູບແບບຂອງ ທລຍ ຕ້ອງມີການກຳນົດທິດທາງໃຫ້ຖືກຕ້ອງ ຊຶ່ງກ່ອນອື່ນໝົດຊຸມຊົນພວກເຮົາ ຕ້ອງຄຳນຶງ ເຖິງຄວາມອາດສາມາດຂອງຊາວບ້ານພວກເຮົາວ່າມີ ຄວາມສາມາດອັນໃດແດ່, ມີທ່າແຮງໃນດ້ານໃດແດ່ ເພື່ອ ວ່າພວກເຮົາຈະເຮັດອັນໃດກ່ອນໝາຍຄວາມວ່າ ອັນໃດ ຄວນເຮັດກ່ອນ ຫຼື ອັນໃດຄວນນຳຫລັງ, ອັນໃດຄວນເຮັດປີນີ້, ອັນໃດຈະເຮັດໃນປີຕໍ່ໄປ ແລະ ປີຕໍ່ໆໄປຈະ ເຮັດຫຍັງ?

**<u>ຄວາມໝາຍຂອງຮູບ</u>**

ຖ້າຫາກມີການກຳນົດທິດທາງການພັດທະນາທີ່ຖືກຕ້ອງແລ້ວ ມັນກໍ່ຈະເຮັດໃຫ້ການຈັດຕັ້ງປະຕິບັດມີຜົນສຳເລັດ ຫລື ຖ້າເຮັດສຳເລັດແລ້ວ ມັນກໍ່ມີຄວາມຍືນຍົງ ແລະ ນຳໃຊ້ໄດ້ດີນ. ດັ່ງໃນຮູບພາບນີ້ ພວກເຮົາຈະເຫັນວ່າຜູ້ຈະເຂົ້າຮ່ວມປະຊຸມວາງແຜນພັດທະນາແຕ່ລະຄົນຕ້ອງຄິດວ່າສິ່ງທີ່ຈຳເປັນທີ່ສຸດໃນບ້ານຂອງຕົນແມ່ນຫັຍງເຊັ່ນ:ການສ້າງໂຮງຮຽນ,ສຸກສາລາ,ທາງເຂົ້າບ້ານ,ຊົນລະປະທານ,ຂົວຂ້າມນໍ້າ,ລະບົບນໍ້າສະອາດ/ນໍ້າລິນແລະອື່ນໆເພື່ອປັບປຸງແລະພັດທະນາບ້ານຂອງຕົນໃຫ້ຖືກຕ້ອງແລະສອດຄອງກັບສະພາບບັນຫາຕົວຈິງທີ່ກຳລັງຜະເຊີນ. ດ້ວຍເຫດຜົນດັ່ງກ່າວນີ້, ທລຍ ຈຶ່ງໄດ້ໃຫ້ຄວາມສຳຄັນທີ່ສຸດວ່າການພັດທະນາຊຸມຊົນ ຕ້ອງໄປຕາມທິດ ທາງທີ່ຖືກຕ້ອງ.

ແນວທາງການພັດທະນາທີ່ຖືກ ຕ້ອງຄວນປະກອບດ້ວຍບັນດາເງື່ອນໄຂລຸ່ມນີ້:

ມີວັດຖຸ, ເງິນ ແລະ ແຮງງານພຽງພໍສໍາລັບເຮັດໃຫ້ແນວທາງການພັດ ທະນາທີ່ກໍານົດໄວ້ນັ້ນປະກົດຜົນເປັນຈິງ.ມີຄວາມສາມາໃນການຈັດຕັ້ງປະຕິບັດ

- ເລີ່ມແຕ່ນ້ອຍຫາໃຫຍ່
- ບໍ່ແຕະຕ້ອງຫຼືບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ສະເໜີໃຫ້ຜູ້ອໍານວຍຄວາມສະ ດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ.

| *ຄວາມງ່າຍດາຍ*<br>*ການອອກແບບໂຄງການ, ລະບຽບຫລັກການທີ່ງ່າຍດາຍ ຊຶ່ງຊຸມຊົນສາມາດເຂົ້າໃຈໄດ້* |
|---|

- ***ພື້ນທີ່ເປົ້າໝາຍ ແລະ ກຸ່ມເປົ້າໝາຍ***

| | |
|---|---|
| **ແຂວງ** | **11** |
| **ເມືອງ** | **42** |
| **ກຸ່ມບ້ານ** | **284** |
| **ບ້ານ** | **1,995** |
| **ຄົວເຮືອນ** | **129,837** |
| **ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ** | **791,819** |
| **ແມ່ຍິງທີ່ຈະໄດ້ຮັບຜົນປະໂຫຍດ** | **399,798** |

### ກຸ່ມເປົ້າໝາຍແມ່ນໃຜ ແລະ ມີຄວາມສໍາຄັນແນວໃດ?

ອີງຕາມຂໍ້ມູນຂອງສູນກາງແນວລາວສ້າງຊາດ. ຊົນເຜົ່າ ຢູ່ ສ ປ ປ ລາວ ປະກອບດ້ວຍ 49 ຊົນເຜົ່າ, ໃນນັ້ນກຸ່ມຊົນເຜົ່າ ທີ່ໃຊ້ພາສາ ມອນ-ຂະແມ, ມົ້ງ-ມ້ຽນ, ຈີນ-ຕິເບດ ຖືເປັນກຸ່ມດ້ອຍໂອກາດໃນການພັດທະນາ ແລະ ເຂົາເຈົ້າມີຮູບແບບດໍາລົງຊີວິດ ທີ່ແຕກຕ່າງຈາກຊົນເຜົ່າສ່ວນໃຫ່ຍທີ່ໃຊ້ພາສາ ລາວໄຕ. ສາມຊົນເຜົ່າທີ່ກ່າວມາຂ້າງເທິງນັ້ນ ເມື່ອລວມກັນແລ້ວແມ່ນກວມອັດຕາສ່ວນພົນລະເມືອງປະມານ 65% ຊຶ່ງຍັງມີລະດັບຄວາມທຸກຍາກເກີນກ່ວາ 42% ຖ້າທຽບໃສ່ລະດັບຄວາມທຸກຍາກຂອງກຸ່ມຊົນເຜົ່າລາວ-ໄຕ ທີ່ມີພຽງ 25%. ໝາຍຄວາມວ່າ: ກຸ່ມເປົ້າໝາຍຂອງ ທລຍ ຈຶ່ງເນັ້ນໃສ່ບ້ານທຸກຍາກດັ່ງທີ່ກ່າວມາຂ້າງເທິງນັ້ນ ແລະ ເຮັດແນວໃດ ຈຶ່ງຈະເຮັດໃຫ້ເຂົາເຈົ້າໄດ້ເຂົ້າເຖິງແຫລ່ງທຶນ ແລະຊັບພະຍາກອນຕ່າງໆຂອງໂຄງການ. ຢູ່ໃນຄູ່ມືການປະຕິບັດໂຄງການຂອງ ທລຍ ໄດ້ກໍານົດໄວ້ວ່າ 66% ຂອງໂຄງການຍ່ອຍຈະຕ້ອງຕົກໃສ່ບ້ານທຸກຍາກທີ່ສຸດ.

- *ໂຄງຮ່າງການຈັດຕັ້ງຂອງ ທລຍ*

**ສະພາບໍລິຫານ ທລຍ**

*ທລຍ* **ຂັ້ນສູນກາງ** *ເບື້ອງ*

- ຜູ້ອໍານວຍການ
- 4 ພະແນກ (ບໍລິຫານ-ການເງິນ, ວິຊາການ, ພັດທະນາຊຸມຊົນ ແລະ ຕິດຕາມປະເມີນຜົນ)

- ສະພາບໍລິຫານ
- ຫ້ອງການ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ

*ທລຍ* **ຂັ້ນແຂວງ** *ເບື້ອງ*

- ຜູ້ປະສານງານ ທລຍ
- 4 ໜ່ວຍງານ (ບໍລິຫານ-ການເງິນ, ວິຊາການ, ພັດທະນາຊຸມຊົນ ແລະ ຕິດຕາມປະເມີນຜົນ)

- ຜູ້ປະສານງານເບື້ອງລັດ
- ຫ້ອງການ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ

*ທລຍ* **ຂັ້ນເມືອງ** *ເບື້ອງລັດ*

- ການເງິນ
- ວິຊາການ
- ພັດທະນາຊຸມຊົນ

- ສະພາບໍລິຫານ
- ຮອງເຈົ້າເມືອງ
- ຫ້ອງການວິຊາກາທີ່ກ່ຽວຂ້ອງ

*ທລຍ* **ຂັ້ນກຸ່ມບ້ານ** *ເບື້ອງ*

- ຜູ້ປະສານງານກຸ່ມບ້ານ
- ຕົວແທນບ້ານ
- ຄະນະ ກສກ

- ຄະນະກຸ່ມບ້ານພັດທະນາ

*ທລຍ* **ຂັ້ນບ້ານ** *ເບື້ອງລັດ*

- ຕົວແທນບ້ານ
- ທີມງານຈັດຕັ້ງປະຕິບັດ ແລະ ຈັດຊື້-ຈັດຈ້າງ
- ທີມງານຄຸ້ມຄອງນໍາໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ
- ຄະນະ ກສກ

- ນາຍບ້ານ
- ຫົວໜ້າໜ່ວຍ
- ອົງການຈັດຕັ້ງມະຫາຊົນ

- ກິດຈະກຳທີ່ ທລຍ *ບໍ່ໃຫ້ການສະໜັບສະໜູນ*
    - ການສ້າງເສັ້ນທາງໃໝ່ ອີງຕາມມາດຖານໃໝ່ ພາຍໃຕ້ຂໍ້ກຳນົດການຈັດລະດັບເສັ້ນ ທາງຂອງກະຊວງ ໂຍທາທິການ ແລະ ຂົນສົ່ງໃນປະຈຸບັນ.
    - ເຂື່ອນໄຟຟ້ານ້ຳຕົກ
    - ສະໂມສອນກຸ່ມບ້ານ;
    - ເລື່ອຍຈັກຕັດໄມ້, ຢາປາບສັດຕູພືດ, ຢາຂ້າແມງໄມ້, ຢາຂ້າຫຍ້າ; ເສັ້ນໃຍຊະນິດນຶ່ງ ເພື່ອຜະສົມເຮັດ ໃຫ້ວັດຖຸສິ່ງຂອງມີຄວາມແຂງແຮງ ແລະ ທົນທານຕໍ່ຄວາມຮ້ອນ, ຫລື ການລົງທຶນອື່ນໆ ທີ່ສ້າງຜົນ ກະທົບຕໍ່ທຳມະຊາດ;
    - ກິດຈະກຳສົ່ງເສີມຊີວິດການເປັນຢູ່ສ່ວນບຸກຄົນ, ລວມທັງການຊ່ວຍເຫລືອລ້າ, ສິນ ເຊື່ອ, ກູ້ຢືມ, ອຸປະກອນ ແລະ ປັດໃຈນຳເຂົ້າສຳລັບການລົງທຶນຂອງຄົວເຮືອນ;
    - ທໍ່ນ້ຳ, ເພື່ອຮັບໃຊ້ການຕໍ່ນ້ຳເຂົ້າເຮືອນສ່ວນບຸກຄົນ;
    - ວັດຖຸ ຫຼື ອຸປະກອນ ທີ່ສ້າງຜົນປະໂຫຍດໃຫ້ພຽງແຕ່ຄົວເຮືອນດຽວ;
    - ການປຸກສ້າງອາຄານ ຫລື ຫ້ອງການຂອງລັດ;
    - ການຈ່າຍເງິນເດືອນໃຫ້ພະນັກງານລັດ ຫລື ເງິນເດືອນຂອງອົງການຈັດຕັ້ງທີ່ໄດ້ຮັບ ເງິນອຸດໜູນ ຈາກລັດຖະບານແລ້ວ;
    - ການຍົກຍ້າຍຖິ່ນຖານ ຫລື ການຂະຫຍາຍບ້ານໃໝ່ ອອກໄປຫາເຂດພື້ນທີ່ຫລໍ່ ແຫລມ, ເຂດປ່າສະຫງວນ ຫລື ເຂດທີ່ສະເໜີໃຫ້ເປັນເຂດສະຫງວນ;
    - ໂຄງການຍ່ອຍ ຫລື ກິດຈະກຳ ທີ່ກ່ຽວພັນ ຫລື ນຳໄປສູ່ການຂູດຮີດແຮງງານເດັກ ຫລື ການຄ້າມະນຸດ,
    - ການສ້າງເສັ້ນທາງ ຫລື ຟື້ນຟູທາງປະເພດໃດໆ ພາຍໃນບໍລິເວນພື້ນທີ່ຫລໍ່ແຫລມ ຫລື ເຂດພື້ນທີ່ສະ ເໜີໃຫ້ເປັນເຂດສະຫງວນ;
    - ອາຄານ ຫລື ສິ່ງອຳນວຍຄວາມສະດວກທີ່ນຳໃຊ້ສຳລັບຈຸດປະສົງທາງສາດສະໜາ;
    - ການຍຶດຄອງທີ່ດິນ ແລະ
    - ການຍົກຍ້າຍບ້ານແບບບໍ່ສະຫມັກໃຈ. ລວມທັງການຍົກຍ້າຍມາ ບໍ່ທັນຮອດ 4 ປີ

**ໝາຍເຫດ:** ທລຍ 2 ບໍ່ສະໜັບສະໜູນແຜນການທ້ອນໂຮມບ້ານ ແລະ/ຫລື ການຍົກຍ້າຍບ້ານ ຊຶ່ງບໍ່ສອດຄ່ອງກັບ ນະໂຍບາຍຂອງທະນະຄານໂລກ.

- ປະເພດໂຄງການຍ່ອຍ ແລະ ຫົວຂໍ້ຝຶກອົບຮົມ ທີ່ ທລຍ *ໃຫ້ການສະໜັບສະໜູນ*

| ປະເພດໂຄງການຍ່ອຍ | ຕົວຢ່າງໂຄງການຍ່ອຍ | ຕົວຢ່າງການຝຶກອົບຮົມທີ່ຕິດພັນ |
|---|---|---|
| **ວຽກຄົມມະນາຄົມ** | ຂົວຂະໜາດນ້ອຍ, ທາງຄົນຍ່າງ, ທໍ່ລະບາຍນ້ຳ, ທາງຍ່າງລາດຊັນ, ສ້ອມແປງ ແລະປັບປຸງຫົນທາງ, ທາງລະຫວ່າງບ້ານຫາບ້ານ | • ເຕັກນິກການປ້ອງກັນການເຊາະເຈື່ອນ<br>• ວິທີການຈັດຕັ້ງຂອງກຸ່ມນຳໃຊ້ຫົນທາງ<br>• ວິທີການບຳລຸງຮັກສາທໍ່ລະບາຍນ້ຳແບບງ່າຍດາຍ<br>• ການຄຸ້ມຄອງຊັບພະຍາກອນທຳມະຊາດ<br>• ການປ້ອງກັນເຊື້ອ HIV/AIDS<br>• ການຕ້ານການຄ້າມະນຸດ<br>• ຄວາມປອດໄພຕາມທ້ອງຖະໜົນ<br>• ວິທີການເພີ້ມການເຂົ້າເຖິງ |
| **ການສະໜອງໄຟຟ້າຊຸມຊົນ** | ໄຟຟ້ານ້ຳຍອດ, ໝໍ້ແປງໄຟຟ້າຂະໜາດນ້ອຍ, ຕິດຕັ້ງສາຍໄຟ, ຂະຫຍາຍຕາຂ່າຍໄຟຟ້າ, ໄຟຟ້າແສງຕາເວັນ | ວິທີການໂຄສະນາເຜີຍແຜ່ກ່ຽວກັບການນຳໃຊ້ໄຟຟ້າຢ່າງມີປະສິດ ທິພາບ |
| **ສິ່ງອຳນວຍຄວາມສະດວກດ້ານການຮັກສາສຸຂະພາບຂັ້ນຕົ້ນ** | ສຸກສາລາ (ອາຄານ, ເຄື່ອງຕົບແຕ່ງ, ຫ້ອງນ້ຳ; ເຄື່ອງມື ແລະ ຢາປົວພະຍາດ; ເບັ້ຍລ້ຽງອຸດໜູນສຳລັບພະຍາບານ/ໝໍຕຳແຍສັນຍາຈ້າງ ອາດເປັນເງິນສົດ ຫລື ວັດຖຸ; ຕູ້ຢາປະຈຳບ້ານ; ການຝຶກອົບຮົມ; ທຶນຮຽນ; ອຸປະກອນການແພດ; ໄຟຟ້າແສງຕາເວັນ | • ວິທີການປຸກລະດົມຂົນຂວາຍການສັກຢາກັນພະຍາດ<br>• ການໂຄສະນາສົ່ງເສີມການຮັກສາ ແລະ ປ້ອງກັນສຸຂະພາບໃນຊຸມຊົນ<br>• ການຝຶກອົບຮົມອາສາສະໝັກສາທາລະນະສຸກຂັ້ນບ້ານ ລວມທັງວຽກງານສົ່ງເສີມໂພຊະນາການ |
| **ການສະໜອງນ້ຳ** | ນ້ຳສ້າງ, ນ້ຳລິນ, ວິດຖ່າຍ ແລະອື່ນໆ | • ວິທີການປົກປັກຮັກສາແຫລ່ງນ້ຳ<br>• ການນຳໃຊ້ນ້ຳຖືກຫລັກອະນາໄມ<br>• ການລະບາຍນ້ຳຂອງບ້ານ/ຄົວເຮືອນ |
| **ການສຶກສາ** | ໂຮງຮຽນ ແລະ ໂຮງຮຽນລ້ຽງເດັກ (ອາຄານ, ຫ້ອງນ້ຳ, ເບັ້ຍລ້ຽງອຸດໜູນສຳລັບຄູສັນຍາຈ້າງ, ວັດຖຸ-ອຸປະກອນ, ເຄື່ອງຕົບແຕ່ງ, ການຝຶກອົບຮົມ, ຕຳລາຮຽນ, ເຄື່ອງດົນຕຣີ). | • ຍົກລະດັບ ຫຼື ການຝຶກອົບຮົມໃຫ້ຄູ<br>• ການຈັດຕັ້ງ/ດຳເນີນງານສະມາຄົມພໍ່ແມ່ນັກຮຽນ<br>• ການເຜີຍແຜ່ຂໍ້ມູນຂ່າວສານເພື່ອເພີ້ມອັດຕາການເຂົ້າຮຽນ |
| **ໂຄງລ່າງພື້ນຖານດ້ານກະສິກຳ** | ຝາຍກັນນ້ຳ, ໜອງປາ, ຄອງລະບາຍນ້ຳ, ປະຕູນ້ຳ, ອຸປະກອນລ້ຽງສັດ, ໂຮງເກັບເມັດພືດ-ເລົ້າເຂົ້າ, ຮົ້ວ, ສວນກ້າເບັ້ຍໄມ້ ແລະ ການກໍ່ສ້າງອື່ນໆ | • ວິທີເຮັດສວນຄົວ<br>• ວິທີເກັບກູ້ຜົນຜະລິດຕະພັນກະສິກຳ<br>• ການລ້ຽງສັດ/ສັດຕະວະແພດ<br>• ເຕັກນິກເພື່ອເພີ້ມຜົນຜະລິດກະສິກຳ ໂດຍຮັກສາສິ່ງແວດລ້ອມ<br>• ໂພຊະນາການຄົວເຮືອນ |
| **ໂຄງລ່າງພື້ນຖານດ້ານສາທາລະນະ** | ຕະຫລາດ (ອາຄານ, ຮ່ອງນ້ຳ, ຝາ-ກຳແພງ ແລະສິ່ງອຳນວຍຄວາມສະດວກອື່ນໆ | |

- *ທຶນທີ່ຈະນຳໃຊ້ເຂົ້າໃນ ທລຍ 2 ແລະ ວິທີຈັດສັນເງິນໃຫ້ກຸ່ມບ້ານ*

| ຜູ້ໃຫ້ທຶນ | ຈຳນວນທຶນ (ໂດລາສະຫະລັດ) | (ທຶນຊ່ວຍເຫຼືອລ້າ) |
|---|---|---|
| ລັດຖະບານ ສປປ ລາວ | 10 ລ້ານ | |
| ທະນາຄານໂລກ | 25 ລ້ານ | |
| ປະເທດ ອົດສະຕຣາລີ | 17.5 ລ້ານ | |
| ປະເທດສະວິດເຊີແລນ | 13.2 ລ້ານ | |
| ປະເທດຍີ່ປຸ່ນ | 2.6 ລ້ານ | *ສະເພາະທົດລອງ ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພຊະນາການ* |
| | **ລວມ: 68.3 ລ້ານ** | |

- *ວິທີການຈັດສັນທຶນໃຫ້ກຸ່ມບ້ານ*

***ພື້ນຖານການຈັດສັນງົບປະມານ ແມ່ນອີງໃສ່ຈຳນວນພົນລະເມືອງ (ອີງໃສ່ຂໍ້ມູນປີ 2005)***

| ຈຳນວນປະຊາກອນທັງໝົດຂອງກຸ່ມບ້ານ | ງົບປະມານ ທີ່ຈັດແບ່ງໃຫ້ກຸ່ມ ຕໍ່ປີ |
|---|---|
| < 2,000 ຄົນ | 30,000 ໂດລາສະຫະລັດ ຕໍ່ປີ (ປະມານ 240,000,000 ກີບ ຕໍ່ປີ) |
| 2,000 ຫາ 4,000 ຄົນ | 40,000 ໂດລາສະຫະລັດ ຕໍ່ປີ (ປະມານ 320,000,000 ກີບ ຕໍ່ປີ) |
| >4,000 ຄົນ | 50,000 ໂດລາສະຫະລັດ ຕໍ່ປີ (ປະມານ 400,000,000 ກີບ ຕໍ່ປີ) |

**ໝາຍເຫດ:**

- ກຸ່ມບ້ານ ບໍ່ສາມາດ ນຳໃຊ້ງົບປະມານເກີນເພດານ ທີ່ຈັດສັນໃຫ້ໃນແຕ່ລະປີນັ້ນ
- ການຈັດສັນໂຄງການ ເຂົ້າໃສ່ແຕ່ລະປີນັ້ນ ຄວນຈັດໂຄງການໜ້ອຍ ຫາ ໃຫຍ່ ສົມມຸດວ່າ ໃນປີທຳອິດເປັນໂຄງການໜ້ອຍ ປີທີ່ສອງ ເປັນໂຄງການໜ້ອຍ, ປີທີ່ສາມ ຫຼື ປີທີ່ 4 ຈິ່ງເປັນໂຄງການໃຫຍ່. ຈຸດປະສົງເຮັດແບບນີ້ ກໍເພາະວ່າ ໃນຊຸມປີທຳອິດ ສ້າງໃຫ້ເຂົາເຈົ້າມີຄວາມເຂັ້ມແຂງ ແລະ ມີຄວາມສາມາດເສັຽ ກ່ອນ
- ການຈັດສັນງົບປະມານເປັນໄປໃນປະຈຳປີ , ການໂອນງົບປະມານເຂົ້າໃນບັນຊີຂອງກຸ່ມບ້ານເປັນງວດ, ສຳລັບຄ່າບໍລິຫານໂຄງການຍ່ອຍບໍ່ໃຫ້ເກີນ 3% ໂດຍໃຫ້ມີການວາງແຜນການນຳໃຊ້ຢ່າງຄັກແນ່.

- *ການປະກອບສ່ວນຂອງຊຸມຊົນ*

  ຢ່າງໜ້ອຍ 10% ຂອງມູນຄ່າໂຄງການຍ່ອຍ ຕ້ອງໄດ້ປະກອບສ່ວນຈາກຊຸມຊົນ, ຍົກເວັ້ນກໍລະນີບ້ານດັ່ງກ່າວນັ້ນ ເປັນບ້ານທຸກຍາກທີ່ສຸດ ແລະ ບໍ່ມີຄວາມສາມາດປະກອບສ່ວນໄດ້ແທ້ໆ ແຕ່ຕ້ອງໄດ້ຮັບການອະນຸມັດຈາກຫ້ອງການ ທລຍ ແຂວງ. ການປະກອບສ່ວນຂອງຊຸມຊົນອາດເປັນເງິນສົດ, ການປະກອບສ່ວນດ້ານແຮງງານ, ທີ່ດິນ ຫລືວັດຖຸທີ່ມີໃນທ້ອງຖິ່ນ.

- *ມາດຕະການໃນການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ*

  ຈຸດປະສົງເພື່ອຊ່ວຍຟື້ນຟູ ຫຼື ປັບປຸງ ມາດຕະຖານການດຳລົງຊີວິດ ແລະ ລາຍຮັບຂອງຜູ້ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຕ່າງໆ ຢ່າງໜ້ອຍໃຫ້ໄດ້ລະດັບ ຫຼື ເທົ່າກັບກ່ອນບໍ່ທັນມີໂຄງການ.

<u>**ນະໂຍບາຍປົກປ້ອງສິ່ງແວດລ້ອມລວມມີ**</u>

- ການປະເມີນດ້ານສິ່ງແວດລ້ອມ
- ການຄວບຄຸມ ການນຳໃຊ້ຢາປາບສັດຕູພືດ

<u>**ນະໂຍບາຍປົກປ້ອງສັງຄົມ**</u>

- ນະໂຍບາຍຊົນເຜົ່າ
- ການຍົກຍ້າຍຈັດສັນ
- ການທົດແທນຄືນ (ແມ່ນການທົດແທນຄືນ ໂດຍ ຊຸມຊົນ ເອງ)

- *ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ*

ກົ-ນໄກສະແດງຄຳຄິດຄຳເຫັ-ນ ແລະ ແກ້ໄຂບັ-ນຫາ (ກສກ) ແມ່-ນກົ-ນໄກ ເພື່ອຮັບຟັງຄຳຄິດຄຳເຫັ-ນຈາກພໍ່ແມ່ປະຊາຊົ-ນ, ໂດຍສະເພາະ ຈາກຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃ-ນພື້ນທີ່ເປົ້າໝາຍຂອງ ທລຍ. ກົນໄກດັ່ງກ່າວ ຈະຊ່ວຍໃນ-ການ-ແກ້ໄຂບັ-ນຫາຕ່າງໆທີ່ເກີດຂຶ້-ນ ພາຍໃຕ້ການ-ຈັດຕັ້ງປະຕິບັດ ວຽກງາ-ນຂອງໂຄງກາ-ນ ທລຍ. -ນອກຈາກນ-ັ້ີ, ຍັງເປັ-ນການສ້າງຄວາມເຂັ້ມແຂງ ແລະ ສະຕິເປັ-ນເຈົ້າ ໃຫ້ແກ່ຊຸມຊົ-ນໃນ-ການ-ພັດທະນາດ້ວຍໂຕເຂົາເຈົ້າເອງອີກດ້ວຍ. ຄຳຄິດຄຳເຫັ-ນຂອງພໍ່ແມ່ປະຊາຊົ-ນຈະເປັ-ນກາ-ນຊ່ວຍໃຫ້ສະຖາບັ-ນທີ່ກ່ຽວຂ້ອງ ຂອງລັດກັບກາ-ນຊ່ວຍເຫລືອຄອບຄົວຜູ້ທຸກຍາກໃນເຂດຊົ-ນນ-ະບົດ, ການ-ກຳນ-ົດ-ະໂຍບາຍຕ່າງໆດ້າ-ການ-ພັດທະນ-າ ແລະ ຫລຸດຜ່ອ-ຄວາມທຸກຍາກຕໍ່ຄອບ ຄົວຜູ້ທຸກຍາກໄດ້ອີກ.

## ຊ່ອງທາງໃນການສະແດງຄຳຄິດຄຳເຫັນ

*ຜ່າ□ຕູ້ຮັບຄຳຄິດ ຄຳເຫັນທີ່ຕັ້ງ ຢູ່ແຕ່ລະບ້າ□*






*ຜ່າ□ໂທລະສັບ ສາຍດ່ວ□*

ຢູ່ທຸກໆສະຖານ-ທີ່ໆມີສັ-ນຍານ-ໂທລະສັບສາມາດໂທເຂົ້າຫາໂທລະສັບສາຍດ່ວນ- ເບີ 161 ໄດ້ ໂດຍຈະມີພະນັກ ງານພະນັກງານ-ຢູ່ຂັ້ນສູນກາງເປັນຜູ້ຮັບສາຍໂດຍກົງ ໃນເວລາໂມງລັດຖະການ ເລີ່ມແຕ່ເວລາ 08:30 ໂມງເຊົ້າ ຫາ 16:30 ໂມງແລງ ຂອງວັນ-ຈັ-ນ ເຖິງວັ-ນສຸກ, ສາຍດ່ວນດັ່ງງກ່າວແມ່-ບໍລິກາ-ນລ້າໆ (ບໍ່ໄດ້ເສຍຄ່າໂທ)

- *ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ*

❖ **ຜູ້ປະສານງານກຸ່ມບ້ານແມ່ນໃຜ?**

ຜູ້ປະສານງານໃຫ້ກຸ່ມບ້ານ ແມ່ນຜູ້ທີ່ມີຄວາມສຳຄັນຫລາຍ ໃນການເຮັດວຽກຂອງ ທລຍ ຢູ່ຂັ້ນຊຸມຊົນ ເພາະວ່າເຂົາເຈົ້າຈະເປັນຜູ້ທີ່ເຊື່ອມຕໍ່ ລະຫວ່າງ ທລຍ ກັບ ຊາວບ້ານ. ***ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ ແມ່ນຈະເປັນຜູ້ອຳ ນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງ ທລຍ ຢູ່ແຕ່ລະບ້ານ ໃນກຸ່ມບ້ານຂອງຕົນ*** ຊຶ່ງລວມມີ: ຂັ້ນຕອນການວາງແຜນແບບມີສ່ວນຮ່ວມ (ກອງປະຊຸມວາງແຜນພັດທະນາບ້ານ ແລະ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ) ລວມທັງການຈັດຕັ້ງປະຕິບັດໂຄງການຍ່ອຍ. ຜູ້ປະສານງານກຸ່ມບ້ານ ສາມາດເຮັດໃຫ້ຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ເປັນຮູບປະທຳ ຖ້າຫາກເຂົາເຈົ້າໄດ້ຖືກຄັດເລືອກ ແລະ ໄດ້ຮັບການຝຶກອົບຮົມທີ່ເໝາະສົມ. ຜູ້ປະສານງານກຸ່ມບ້ານ ຈະໄດ້ເຮັດວຽກງານ ທລຍ ຕະລອດໄລຍະຮອບວຽນການຈັດຕັ້ງປະຕິບັດໃນແຕ່ລະປີ ແລະຈະໄດ້ຮັບອັດຕາເບັ້ຽລ້ຽງ ແລະ ຄ່າໃຊ້ຈ່າຍໃນການເດີນທາງ ໃນເວລາໄປເຮັດວຽກດັ່ງກ່າວນັ້ນ.

**ຜູ້ປະສານງານກຸ່ມບ້ານ** ຈະຮັບຜິດຊອບໜ້າວຽກຂອງຕົນ ບໍ່ເກີນ 4 ປີ ທັງນີ້ເພື່ອເປີດໂອກາດໃຫ້ຜູ້ອື່ນໆ ແລະ ເປັນການສ້າງບຸກຄະລາກອນສືບທອດຢູ່ພາຍໃນກຸ່ມບ້ານ. ຊຸມຊົນຈະເປັນຜູ້ປະເມີນການເຮັດວຽກຂອງຜູ້ປະສານງານກຸ່ມບ້ານ ແລະ ຈະສະເໜີລາຍຊື່ຜູ້ໃໝ່ເພື່ອຄັດເລືອກເປັນຜູ້ປະສານງານກຸ່ມບ້ານຄົນໃໝ່ ຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ (ສຳລັບແຂວງໃໝ່) ແລະ ຢູ່ກອງປະຊຸມສະຫລຸບກາຍໃຊ້ຈ່າຍເງິນໂຄງການຍ່ອຍຄັ້ງສຸດທ້າຍ (ສຳລັບແຂວງເກົ່າ) ທີ່ຈັດຂຶ້ນຢູ່ແຕ່ລະຮອບວຽນ.

- **ຈຳນວນຜູ້ປະສານງານກຸ່ມບ້ານຕໍ່ກຸ່ມບ້ານ**

ໂດຍຫລັກການແລ້ວ ແຕ່ລະກຸ່ມບ້ານຈະໄດ້ຄັດເລືອກເອົາຜູ້ປະສານງານກຸ່ມບ້ານ 1 ຄົນ, ແຕ່ຖ້າຫາກໄລຍະຫ່າງລະ ຫວ່າງບ້ານທີ່ທຸກຍາກທີ່ສຸດ ຫ່າງໄກກັນຫລາຍ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ກໍສາມາດຄັດເລືອກເອົາ 2 ຄົນ.

ຜູ້ປະສານງານກຸ່ມບ້ານນີ້ງໆ ອາດແມ່ນຜູ້ຍິງ 1 ຄົນ ຫຼື ອາດແມ່ນຍິງ 1 ຄົນ ແລະ ຊາຍ 1 ຄົນ ຫຼື ອາດແມ່ນຜູ້ຍິງ 2 ຄົນ.

❖ **ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ**

ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ ແມ່ນເປັນຜູ້ຊ່ວຍທີມງານ ທລຍ ຂັ້ນເມືອງ ແລະເປັນຜູ້ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຄງການຢູ່ກຸ່ມບ້ານຂອງຕົນ ນັບແຕ່ການວາງແຜນຈົນເຖິງການ ຈັດຕັ້ງປະຕິບັດໂຄງການຍ່ອຍ. ໜ້າທີ່ຫຼັກໆຂອງຜູ້ປະສານງານກຸ່ມບ້ານມີດັ່ງນີ້:

- ຊ່ວຍກະກຽມໃນການຈັດກອງປະຊຸມ ທີ່ຈະຈັດຂຶ້ນຢູ່ຂັ້ນບ້ານ ແລະ ຢູ່ຂັ້ນກຸ່ມບ້ານ (ກອງປະຊຸມວາງແຜນພັດທະ ນາບ້ານ, ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ແລະ ກອງປະຊຸມອື່ນໆ ພາຍໃຕ້ວຽກງານ ທລຍ);
- ຊ່ວຍເຮັດໃຫ້ປະຊາຊົນທຸກຄົນຮູ້ຈັກ ກ່ຽວກັບ ທລຍ ແລະ ຊຸກຍູ້ໃຫ້ເຂົາເຈົ້າທຸກຄົນເຂົ້າຮ່ວມກອງປະຊຸມ ແລະ ເຂົ້າຮ່ວມກິດຈະກຳຕ່າງໆພາຍໃຕ້ວຽກງານ ທລຍ, ໂດຍສະເພາະແມ່ນຊົນເຜົ່າ, ຜູ້ຍິງ ແລະ ຜູ້ດ້ອຍໂອກາດ ອື່ນໆ;

- ຊ່ວຍພະນັກງານ ທລຍ ໃນການອຳນວຍຄວາມສະດວກ ໃຫ້ແກ່ຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດ ໂຄງການຍ່ອຍ ທີ່ຈະຈັດຕັ້ງປະຕິບັດຢູ່ກຸ່ມບ້ານຂອງຕົນ;

- ຊ່ວຍເຮັດໃຫ້ຊຸມຊົນມີຄວາມເຂົ້າໃຈ ກ່ຽວກັບຄວາມຕ້ອງການໃນການປະກອບສ່ວນຂອງຊຸມຊົນ ເຂົ້າໃນການ ຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຮັບປະກັນໃຫ້ການປະກອບສ່ວນນັ້ນ ໄດ້ຕາມຄາດໝາຍ ແລະ ຕາມກຳ ນົດເວລາ ທີ່ໄດ້ກຳນົດໄວ້ຮ່ວມກັນ

- ຊ່ວຍຮັບປະກັນ ວ່າກິດຈະກຳຂອງ ທລຍ ໄດ້ມີການປະສານກັບພາກສ່ວນອື່ນໆ ແລະ ໂຄງການພັດທະນາ ອື່ນໆ ທີ່ກຳລັງຈັດຕັ້ງປະຕິບັດຢູ່ໃນກຸ່ມບ້ານຂອງຕົນທັງນີ້ ເພື່ອຫຼີກລ້ຽງບັນ ຫາການຊໍ້າຊ້ອນກັນ;

- ຊ່ວຍຮັບປະກັນ ວ່າຜູ້ດ້ອຍໂອກາດ ໄດ້ເຂົ້າຮ່ວມໃນຂະບວນການປຶກສາຫາລືຕ່າງໆ (ການແຍກ ກຸ່ມຍ່ອຍ ເພື່ອ ປຶກສາຫາລື ຖ້າມີຄວາມຈຳເປັນ);

- ນຳເອົາບົດບັນທຶກກອງປະຊຸມຕ່າງໆໄປຕິດໄວ້ກະດານຂ່າວຂອງບ້ານ ແລະ ກຸ່ມບ້ານ;

- ເຮັດບົດລາຍງານປະຈຳເດືອນ ຈາກນັ້ນສົ່ງໃຫ້ ທລຍ ເມືອງ, ອຳນາດການປົກຄອງ ແລະ ຫ້ອງ ການທີ່ກ່ຽວຂ້ອງ ຂອງເມືອງ;

- ເປັນຄະນະກຳມະການຮັບຜິດຊອບ ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (ກສກ) ພ້ອມທັງຊ່ວຍ ບັນທຶກ ແລະ ດຳເນີນການ ກວດສອບທຸກຄຳຄິດຄຳເຫັນ ທີ່ໄດ້ສົ່ງຜ່ານທາງ ກສກ;

- ຊ່ວຍແປພາສາທ້ອງຖິ່ນໃນເວລາຈັດກອງປະຊຸມ, ຝຶກອົບຮົມ, ການຢ້ຽມຢາມກຸ່ມບ້ານ ແລະ ອື່ນໆ

- ແຈ້ງໃຫ້ ທລຍ ເມືອງຮັບຊາບ ທຸກໆບັນຫາທີ່ເກີດຂຶ້ນ ລວມທັງບັນຫາທີ່ສົ່ງຜົນກະທົບຕໍ່ສິ່ງແວດ ລ້ອມ ແລະ ສັງຄົມ.

### ❖ ເງື່ອນໄຂການເລືອກຜູ້ປະສານງານກຸ່ມບ້ານ

- ຄວນເປັນຜູ້ທີ່ ມີຄວາມສົນໃຈໃນການຊ່ວຍເຫລືອຜູ້ອື່ນ, ໂດຍສະເພາະຜູ້ທຸກຍາກທີ່ສຸດ;
- ຄວນເປັນຜູ້ທີ່ຫ້າວຫັນ, ມີຄວາມອົດທົນ ແລະ ມີຄວາມມັກໃນການລົງໄປເຮັດວຽກຢູ່ບ້ານທຸກຍາກ;
- ຄວນເປັນຜູ້ທີ່ມີຄວາມສົນໃຈ ຢາກຮຽນຮູ້ ແລະ ນຳໃຊ້ ລະບຽບຫລັກການ ແລະ ວິທີການເຮັດວຽກແບບມີສ່ວນຮ່ວມ ຕາມຮູບແບບຂອງ ທລຍ
- ຄວນເປັນຜູ້ທີ່ມີຄວາມສາມາດ ໃນການໂອ້ລົມຕໍ່ພໍ່ແມ່ປະຊາຊົນ ( ສຳລັບ ທັກສະໃນການເປັນຜູ້ອຳນວຍ ຄວາມສະ ດວກນັ້ນ ທລຍ ຈະໄດ້ຝຶກອົບຮົມໃຫ້ຕື່ມ)
- ຄວນເປັນຜູ້ທີ່ມີເວລາເຮັດວຽກນຳ ທລຍ ຢ່າງເຕັມສ່ວນ (ຍົກເວັ້ນຜູ້ທີ່ເປັນພະນັກງານລັດ, ນາຍບ້ານ ແລະ ອຳນາດການປົກຄອງກຸ່ມບ້ານ...)
- ຄວນເປັນຜູ້ທີ່ມີຄວາມນັບຖື ແລະ ມີຄວາມເຊື່ອໝັ້ນ ຈາກຊາວບ້ານ
- ຄວນເປັນຜູ້ທີ່ມາຈາກບ້ານທີ່ທຸກຍາກ (ອີງໃສ່ຂໍ້ມູນຄວາມທຸກຍາກຈາກເມືອງ) ຍົກເວັ້ນຜູ້ທີ່ມາຈາກບ້ານຂ້ອນ ຂ້າງດີ ຫຼື ບ້ານບໍ່ທຸກ;
- ຄວນເປັນຊົນເຜົ່າ (ກໍລະນີເລືອກເອົາຜູ້ທີ່ເປັນຊົນເຜົ່າບໍ່ໄດ້, ໃຫ້ຄັດເລືອກມາຈາກຄອບຄົວທີ່ທຸກຍາກ);

- ເປັນຜູ້ມີຄວາມສາມາດອ່ານ ແລະ ຂຽນພາສາລາວໄດ້, ຢ່າງໜ້ອຍຜູ້ທີ່ຮຽນຈົບຊັ້ນປະຖົມສົມບູນ;
- ມີອາຍຸລະຫວ່າງ 25 ຫາ 45 ປີ
- ເປັນຜູ້ຍິງ ຈະໄດ້ຮັບພິຈາລະນາ ເປັນພິເສດ;
- ເປັນຜູ້ທີ່ມີປະສົບການ ໃນການເຮັດວຽກກັບອົງການພັດທະນາອື່ນໆຜ່ານມາ ຍິ່ງເປັນການດີ.

### ❖ ຂັ້ນຕອນການຄັດເລືອກ ຜູ້ປະສານງານກຸ່ມບ້ານ

**<u>ຂັ້ນຕອນທີ່ 1</u>: ຄັດເລືອກຜູ້ປະສານງານກຸ່ມບ້ານຊົ່ວຄາວ**

- ຄັດເລືອກ ກ່ອນກອງປະຊຸມແນະນຳໂຄງການ ທລຍ ຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ ປະມານ 2-3 ອາທິດ.

<u>ໝາຍເຫດ</u>:

1. ຜູ້ປະສານງານກຸ່ມບ້ານຊົ່ວຄາວ ຈະເປັນຜູ້ຊ່ວຍວຽກງານ ທລຍ ກ່ຽວກັບການກະກຽມກອງປະຊຸມແນະນຳໂຄງ ການ ທລຍ ຂັ້ນບ້ານ, ກອງປະຊຸມວາງແຜນພັດທະນາບ້ານ ແລະ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ.
2. ແບບຟອມປະເມີນຜົນ ດັ່ງຂ້າງລຸ່ມນີ້:

| ລດ | ຊື່ຜູ້ສະໝັກ | ການໃຫ້ຄະແນນ | | | | | ຄະແນນລວມ |
|---|---|---|---|---|---|---|---|
| | | ລະດັບການສຶກສາ (ສູງສຸດ 25 ຄະແນນ) | ຊົນເຜົ່າ (ສູງສຸດ 30 ຄະແນນ) | ຜູ້ຍິງ (ສູງສຸດ 30 ຄະແນນ) | ຜູ້ທຸກຍາກ (ສູງສຸດ 20 ຄະແນນ) | ຄົນໜຸ່ມນ້ອຍ (ສູງສຸດ 25 ຄະແນນ) | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |

**<u>ຂັ້ນຕອນທີ່ 2</u>: ຄັດເລືອກຜູ້ປະສານງານກຸ່ມບ້ານຖາວອນ.**

- ຄັດເລືອກຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ
- ຜູ້ປະສານງານກຸ່ມບ້ານ ຈະໄດ້ຄັດເລືອກມາຈາກ ຕົວແທນບ້ານໃດນຶ່ງໃນກຸ່ມບ້ານ ແລະຜູ້ປະສານງານກຸ່ມບ້ານຊົ່ວຄາວ;
- ຕື່ມເງື່ອນໄຂການຄັດເລືອກເຂົ້າຕື່ມ ເຊັ່ນ:
  1) ເປັນຜູ້ທີ່ມາຈາກບ້ານທຸກຍາກ (ບ້ານທຸກຍາກທີ່ໄດ້ກຳນົດໂດຍຕົວແທນແຕ່ລະບ້ານຢູ່ກອງປະຊຸມວາງແຜນ ພັດທະນາກຸ່ມບ້ານ) ບ້ານບໍ່ທຸກຈະຖືກຍົກເວັ້ນ
  2) ເປັນຜູ້ທີ່ມາຈາກບ້ານທີ່ບໍ່ໄກກັນ ລະຫວ່າງບ້ານທີ່ຈະໄດ້ຮັບການຊ່ວຍເຫລືອຈາກ ທລຍ ໃນໄລຍະ 4 ປີ (ບ້ານທີ່ໄກທີ່ສຸດຈະຖືກຍົກເວັ້ນ ເຖິງວ່າຈະເປັນບ້ານທຸກຍາກກໍຕາມ)

- *ພາລະບົດບາດຂອງຂະແໜງການທີ່ກ່ຽວຂ້ອງ/ພະນັກງານລັດ*

ຕົວແທນຈາກຂະແໜງວິຊາການ ທີ່ກ່ຽວຂ້ອງຂອງລັດເຊັ່ນ: ຂະແໜງໂຍທາທິການ ແລະ ຂົນສົ່ງ, ສາທາລະນະສຸກ, ສຶກສາ, ກະສິກຳ-ປ່າໄມ້ ແລະ ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈະຊ່ວຍຊຸມຊົນທາງດ້ານເຕັກນິກວິຊາການ ເຊັ່ນ:

- ສຳຫລວດ-ອອກແບບໂຄງ ການຍ່ອຍ,
- ການຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອຮັບປະກັນໃຫ້ຖືກຕ້ອງຕາມວິຊາການ ແລະ ມີຄຸນນະພາບ,
- ການຝຶກອົບຮົມໃນຫົວຂໍ້ທີ່ຕິດພັນກັບໂຄງການຍ່ອຍໂຄງລ່າງພື້ນຖານ,
- ສະໜັບສະໜູນ ເພື່ອເຮັດໃຫ້ໂຄງການຍ່ອຍດັ່ງກ່າວ ໄດ້ນຳໃຊ້ຢ່າງມີປະສິດທິຜົນ ເຊັ່ນ: ສະໜອງຄູສອນສຳລັບໂຮງຮຽນທີ່ສ້າງໃໝ່, ສະໜອງອຸປະກອນການຮຽນ-ການສອນ, ສະໜອງແພດເພື່ອໄປປະຈຳສຸກສາລາ ແລະ ອື່ນໆ.
- ສືບຕໍ່ຕິດຕາມຊຸກຍູ້ ການຄຸ້ມຄອງນຳໃຊ້ ແລະ ບູລະນະໂຄງການຍ່ອຍຂອງຊຸມຊົນເພື່ອໃຫ້ມີຄວາມຍືນຍົງ ຫລັງຈາກທີ່ສຳເລັດໂຄງການ.

- *ພາລະບົດບາດຂອງພະນັກງານ ທລຍ*
  - ພະນັກງານ ພັດທະນາຊຸມຊົນທລຍ ຂັ້ນເມືອງ ຈະເປັນຜູ້ດຳເນີນທຸກໆກອງປະຊຸມກັບຊຸມຊົນ ແລະອຳນວຍຄວາມສະດວກໃຫ້ແກ່ຊຸມຊົນ ເພື່ອເຮັດໃຫ້ເຂົາເຈົ້າເຂົ້າໃຈກິດຈຳກຳຕ່າງໆ ຂອງ ທລຍ ເຊັ່ນ: ກອງປະຊຸມແນະນຳໂຄງການຂັ້ນບ້ານ; ກອງປະຊຸມວາງແຜນພັດທະນາຂັ້ນບ້ານ; ກອງປະຊຸມວາງແຜນພັດທະນາກຸ່ມບ້ານ; ກອງປະຊຸມທົບທວນແຜນພັດທະນາ ແລະ ກອງປະຊຸມລາຍງານຄືນ ແລະຮັບຮອງເອົາແຜນພັດທະນາກຸ່ມບ້ານ ແລະ ກອງປະຊຸມອື່ນໆຕາມຮອບວຽນຂອງໂຄງການ
  - ພະນັກງານວິຊາການຂັ້ນເມືອງ ຈະເປັນຜູ້ອຳນວຍຄວາມສະດວກຢູ່ຂັ້ນຊຸມຊົນ ແລະ ຊ່ວຍຊຸມຊົນຮູ້ດຳເນີນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຮັບປະກັນວ່າວຽກທີ່ໄດ້ຈັດຕັ້ງປະຕິບັດໂດຍບໍລິສັດຜູ້ຮັບເໝົາ ມີຜົນສຳເລັດ. ນອກຈາກນັ້ນ ຍັງເປັນຜູ້ກວດກາທາງດ້ານເຕັກນິກ. ພະນັກງານວິຊາການຂັ້ນເມືອງ ເປັນຜູ້ຝຶກອົບຮົມດ້ານເຕັກນິກໃຫ້ກັບທີມງານຈັດຕັ້ງປະຕິ ແລະ ບູລະນະສ້ອມແປງໂຄງການຍ່ອຍ ຂັ້ນບ້ານ ທາງດ້ານເຕັກ ນິກທັງໝົດ
  - ພະນັກງານການເງິນຂັ້ນເມືອງ ເປັນຜູ້ອຳນວຍຄວາມສະດວກ ແລະ ຈັດຝຶກອົບຮົມໃຫ້ກັບທີມງານການເງິນ ແລະ ທີມງານຈັດຊື້ ຂັ້ນບ້ານ ກ່ຽວກັບການຈັດຊື້ ແລະ ການບໍລິຫານເງິນໂຄງການຍ່ອຍພ້ອມທັງວິທີການຈົດບັນທຶກຕ່າງໆ

**ເວົ້າລວມແລ້ວ**

- ✓ ພະນັກງານ ທລຍ ເປັນຜູ້ແນະນຳ ຫຼື ເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ຊຸມຊົນໃນການຈັດຕັ້ງປະຕິບັດວຽກງານຂອງ ທລຍ ເພື່ອຮັບປະກັນໃຫ້ເຂົາເຈົ້າປະຕິບັດຖືກຕ້ອງຕາມຂັ້ນຕອນທີ່ກຳນົດໄວ້
- ✓ ເປັນຄູຝຶກ ເພື່ອສ້າງທັກສະ ຫຼື ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ/ອຳນາດການປົກຄອງທ້ອງຖິ່ນ
- ✓ ເປັນຜູ້ເຊື່ອມສານ ລະຫວ່າງຊຸມຊົນ ກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ເຊື່ອມສານວຽກງານ ທລຍ ໃຫ້ເຂົ້າກັບວຽກງານອຳນາດການປົກຄອງທ້ອງຖິ່ນ ໂດຍສະເພາະແຕ່ລະຂະແໜງການທີ່ກ່ຽວຂ້ອງ.

*"ໄປຫາປະຊາຊົນ*
*ຢູ່ນຳປະຊາຊົນ*
*ຮຽນນຳປະຊາຊົນ*
*ເລີ່ມຈາກສິ່ງທີ່ເຂົາເຈົ້າຮູ້*
*ແລະ ສ້າງຈາກສິ່ງທີ່ເຂົາເຈົ້າມີ..."*
*"ການຮຽນຮູ້ນຳປະຊາຊົນ ປຽບສະເໝືອນຮຽນຢູ່ມະຫາວິທະຍາໄລຕົວຈິງ"*
*ຄຳເວົ້າຂອງທ່ານປະທານ ໄກສອນ ພົມວິຫານ*

- *ກິດເກນ 10 ຢ່າງ ຂອງການເປັນຜູ້ອຳນວຍຄວາມສະດວກທີ່ດີ*

**ເປົ້າໝາຍ:** ເພື່ອປັບປຸງທັກສະການອຳນວຍຄວາມສະດວກ ໃຫ້ແກ່ຊຸມຊົນ ດັ່ງລາຍລະອຽດລຸ່ມນີ້:

1) ຟັງຫລາຍກ່ວາເວົ້າ

ຈົ່ງຢ່າບັນລະຍາຍ. ວາງຕົວແບບມີປະຕິກິລິຍາ ສອງສົ້ນໃນການສົນທະນາ. ສະເໜີແນວຄວາມຄິດຫລັກ ແລະ ຈຸດປະສົງ ໃນຕອນເລີ່ມຕົ້ນປະຊຸມ, ສະນັ້ນ ຈົ່ງປ່ອຍໃຫ້ສຳມະນາກອນ ເປັນຜູ້ປາກເວົ້າເກືອບທັງໝົດ.

**ຂໍ້ຄວນເອົາໃຈໃສ່ເພີ່ມເຕີມ:**

- ☞ *ໝູນໃຊ້ເວລາຂອງຊຸມຊົນໃຫ້ຄຸ້ມຄ່າຫລາຍທີ່ສຸດ*
- ☞ *ຮຽນຮູ້ຈາກຊາວບ້ານ ແມ່ນຫລັກການພື້ນຖານ ຂອງການໃຊ້ເວລາອັນມີຄ່າຂອງເຂົາເຈົ້າ*
- ☞ *ພໍ່ແມ່ປະຊາຊົນໃນເຂດຊົນນະບົດ ແມ່ນມີຄວາມຫຍຸ້ງຍາກທີ່ສຸດ ໃນການດຳເນີນກິດຈະກຳດຳລົງຊີວິດພາຍໃນຄອບຄົວ ແລະ ມັນກໍ່ມີຄວາມສຳຄັນຫລາຍສຳລັບເຂົາເຈົ້າ*
- ☞ *ເພື່ອຮັກສາເວລາອັນມີຄ່າຂອງເຂົາເຈົ້າ ແລະ ເພື່ອຮຽນຮູ້ໃຫ້ໄດ້ຫລາຍທີ່ສຸດຈາກເວລາທີ່ເຂົາເຈົ້າໃຫ້. ນັ້ນຄືການໃຫ້ປະຊາຊົນໄດ້ມີການແລກປ່ຽນຄຳຄິດຄຳເຫັນຊຶ່ງກັນ ແລະ ກັນແທ້ໆ (ບໍ່ໝາຍ ວ່າ ຜູ້ອຳນວຍຄວາມສະດວກຈເວົ້າແຕ່ຝ່າຍດຽວ*

2) ຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນ

ປະຕິບັດຕໍ່ສຳມະນາກອນຢ່າງ ສະເໝີພາບ ແລະ ໃຫ້ການນັບຖື. ໝັ້ນໃຈວ່າຜູ້ທີ່ບໍ່ມັກເວົ້າຈະໄດ້ໂອກາດໃນການກ່າວເວົ້າ. ຈົ່ງຢ່າປ່ອຍໃຫ້ ຜູ້ໃດໜຶ່ງ ມີອິດທິພົນ ເໜືອກອງປະຊຸມ (ໂດຍການໃຊ້ສຽງດັງ, ໃຊ້ພາສາທີ່ແຂງກະດ້າງ, ເວົ້າຫລາຍໂພດ) - ເຖິງແມ່ນວ່າຈະແມ່ນພະນັກ ງານລັດ, ກຸ່ມບ້ານ ຫລື ຄະນະບ້ານ. ນຳໃຊ້ "ໄມ້ສັນຍາລັກປ່ຽນຜຽນເວົ້າ" ເພື່ອຊ່ວຍເຮັດໃຫ້ກຸ່ມຮັກສາຈຸດສຸມຄວາມສົນໃຈ.

**ຂໍ້ຄວນເອົາໃຈໃສ່ເພີ່ມເຕີມ:**

- *ຄວນຈັດບ່ອນນັ່ງຢູ່ໃນຫ້ອງປະຊຸມ ເປັນຮູບໂຕ U ທັງນີ້ເພື່ອໃຫ້ຜູ້ເຂົ້າຮ່ວມ ໄດ້ນັ່ງໃກ້ກັນຫລາຍຂຶ້ນ ແລະ ໄດ້ເຫັນໜ້າຊຶ່ງກັນ ແລະ ກັນ*

### 3) ໝັ້ນໃຈວ່າຈະໄດ້ຍິນສຽງຂອງແມ່ຍິງ

ຊຸກຍູ້ແມ່ຍິງຢ່າງເປີດເຜີຍ ແລະ ກຸ່ມຊົນເຜົ່າ ໃຫ້ອອກຄໍາຄິດເຫັນຂອງເຂົາເຈົ້າ. ຈັດການປະຊຸມແຍກຕ່າງຫາກ ສໍາລັບແມ່ຍິງ, ຖ້າຫາກ ຕ້ອງການ. ( ຖ້າຫາກຈໍາເປັນ, ໝັ້ນໃຈ ວ່າມີການແປພາສາສໍາລັບຜູ້ທີ່ປາກເວົ້າພາສາຊົນເຜົ່າ.)

**ຂໍ້ຄວນເອົາໃຈໃສ່ເພີ່ມເຕີມ:**

- *ຄວນຈັດໃຫ້ຜູ້ຍິງ ນັ່ງດ້ານໜ້າຂອງກອງປະຊຸມ*
- *ຄວນໂຍນຄໍາຖາມເຈາະຈົງໃຫ້ແກ່ຜູ້ຍິງ*
- *ຖ້າມີຄວາມຈໍາເປັນຄວນແບ່ງກຸ່ມປຶກສາຫາລື ສໍາລັບກຸ່ມຜູ້ຍິງ ຫຼື ກຸ່ມຊົນເຜົ່າຕ່າງຫາກ*

### 4) ນໍາໃຊ້ອຸປະກອນປະຈັກຕາ ຊ່ວຍໃນການອະທິບາຍ

ອຸປະກອນ ເຊັ່ນ ຮູບພາບ, ຮູບແຕ້ມ, ສັນຍາລັກ ເຮັດໃຫ້ ກອງປະຊຸມ ໜ້າສົນໃຈຂຶ້ນຕື່ມ, ໂດຍສະ ເພາະຢູ່ບ່ອນທີ່ມີອັດຕາການກຶກໜັງສືສູງ. ນໍາໃຊ້ອຸປະກອນເຫລົ່ານີ້ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.

### 5) ຮັບປະກັນ ການເຂົ້າໃຈເປັນລັກສະນະດຽວກັນ ກ່ຽວກັບຂໍ້ຄິດເຫັນຕົ້ນຕໍ

ກວດກາຄືນ ວ່າ ທຸກຄົນ ເຂົ້າໃຈແນວຄວາມຄິດຕົ້ນຕໍ. ເຊື້ອເຊີນໃຫ້ສໍາມະນາກອນ ອະທິບາຍ ຈຸດຕົ້ນຕໍຊຶ່ງທ່ານເອງ ປະສົງຢາກ ສື່ຄວາມໝາຍ ( ຕົວຢ່າງ "ທ່ານເຂົ້າໃຈແນວໃດ ເມື່ອຂ້າພະເຈົ້າກ່າວຄໍາວ່າ "ການພັດທະນາແບບມີສ່ວນຮ່ວມ"). ຈົ່ງໃຊ້ຄໍາສັບ ຕາມທີ່ທ່ານເອງເຂົ້າໃຈ ເພື່ອອະທິບາຍຈຸດທີ່ຜູ້ເຂົ້າປະຊຸມໄດ້ຖ່າຍທອດໃຫ້ຟັງ.

### 6) ຈົ່ງກະກຽມເປັນຢ່າງດີ

- *ໝັ້ນໃຈວ່າທ່ານຮູ້ຈັກ ເປັນການລ່ວງໜ້າ ວ່າກອງປະຊຸມ ຈະຈັດຂຶ້ນຢູ່ໃສ.*
- *ໝັ້ນໃຈວ່າ ອຸປະກອນທຸກຢ່າງ ທີ່ທ່ານຕ້ອງການ ມີພ້ອມໃຊ້ (ແຜ່ນເຈັ້ຍ, ປາກກາຂຽນ, ອຸປະກອນໂຄສະນາເຜີຍແຜ່ , ເຄື່ອງມືຮັບໃຊ້ການນັບ/ກະຕ່າ)*
- *ປະພຶດເປັນແບບຢ່າງທີ່ດີ ໂດຍການມາປະຊຸມຖືກຕາມເວລາ*
- *ຮູ້ຂະໜາດກຸ່ມ ທີ່ທ່ານຈະເຮັດວຽກນໍາ ແລະ ວ່າທ່ານ ປະສົງຢາກແຍກ ອອກເປັນກຸ່ມຍ່ອຍຫລືບໍ່ (ຖ້າເປັນເຊັ່ນນັ້ນ, ບົນພື້ນ ຖານອັນໃດ ທີ່ທ່ານຈະແບ່ງກຸ່ມ ຕົວຢ່າງ ແບ່ງຕາມເພດ, ອາຍຸ, ຊົນເຜົ່າ)*

### 7) ມີຜູ້ບັນທຶກໜຶ່ງຄົນ

ມອບໝາຍໃຫ້ຜູ້ໜຶ່ງ ( ອາດຈະແມ່ນຜູ້ອໍານວຍຄວາມສະດວກຂອງກຸ່ມບ້ານ) ເພື່ອເຮດໜ້າທີ່ເປັນບັນທຶກ. ຜູ້ກ່ຽວ ບັນທຶກ ການຕັດສິນໃຈຕົ້ນຕໍ ໃນກອງປະຊຸມ, ຈົດກ່າຍເອົາແຜນທີ່ ( ຈາກການສ້າງແຜນວາດ) ແລະ ຮັກສາເວລາ (ບອກເຕືອນ ຜູ້ອໍານວຍຄວາມສະດວກ ເມື່ອໃດໄລຍະ ປະຊຸມ ຫາກໝົດເວລາແລ້ວ).

### 8) ບໍລິຫານເວລາຢ່າງສະຫລາດ

ຮັກສາກອງປະຊຸມໃຫ້ຢູ່ໃນຂອບເຂດເວລາ ແລະ ເນື້ອຫາ, ແຕ່ກໍຕ້ອງປ່ອຍໃຫ້ມີຄວາມຍືດຍຸ່ນ. ຮູ້ຈັກ

ວ່າເມື່ອໃດຄວນ ເຂົ້າແຊກແຊງ ໃນ ການຄົ້ນຄວ້າ ເພື່ອເຮັດໃຫ້ກອງປະຊຸມດໍາເນີນໄປຕາມກໍານົດການ.

9) ເລັ່ງເປົ້າໝາຍໃສ່ກຸ່ມທີ່ມີຂະໜາດນ້ອຍກວ່າ

ຈົ່ງພະຍາຍາມ ຮັກສາຂະຫນາດຂອງກຸ່ມ ບໍ່ໃຫ້ກາຍ 25 ຄົນ. ຖ້າຫາກຈໍາເປັນ, ໃຫ້ພິຈາລະນາ ແບ່ງອອກເປັນກຸ່ມຍ່ອຍ ແລະ ແຕ່ງຕັ້ງ ຜູ້ອໍາ ນວຍຄວາມສະດວກ ແລະ ຜູ້ບັນທຶກ ຢ່າງລະໜຶ່ງຄົນ ສໍາລັບແຕ່ລະກຸ່ມ. ພິຈາລະນາ ແບ່ງຜູ້ຊາຍ ແລະ ແມ່ຍິງ ອອກເປັນກຸ່ມຕ່າງຫາກ ແລະ, ຖ້າຫາກເໝາະສົມ ຍ້ອນເຫດຜົນທາງພາສາ, ຈົ່ງແຍກກຸ່ມສະເພາະຊົນເຜົ່າ. ອາດເປັນປະໂຫຍດ ທີ່ຈະແບ່ງກຸ່ມ ອີງຕາມອາຍຸ ( ຕົວຢ່າງ ທີ່ແຕ່ງງານແລ້ວ ແລະ ຍັງເປັນໂສດ).

10) ຮັກສາການມີອາລົມເບີກບານ ສະນຸກສະໜານ

*ການມີສ່ວນຮ່ວມຈະມີບັນຍາກາດດີຫລາຍ ຖ້າຫາກການປະຊຸມເຕັມ ໄປດ້ວຍຄວາມມ່ວນຊື່ນ!*

- ***ການຈັດກອງປະຊຸມແນະນໍາໂຄງການຂັ້ນບ້ານ***

ຈະໄດ້ອະທິບາຍຈຸດປະສົງຂອງກອງປະຊຸມດັ່ງກ່າວນີ້ວ່າ: ເພື່ອເປັນການແນະນໍາໃຫ້ແກ່ຊາວບ້ານຮັບຮູ້ກ່ຽວກັບຈຸດປະສົງຕົ້ນຕໍ, ວິໄສທັດ, ລະບຽບ-ຫລັກການ ແລະ ຂັ້ນຕອນຕ່າງໆຂອງ ທລຍ.

ປົກກະຕິກອງປະຊຸມດັ່ງກ່າວນີ້ ຈະຈັດຂຶ້ນ ໃນອາທິດຕໍ່ໄປຫລັງຈາກກອງປະຊຸມແນະນໍາຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ (ເປັນໄປຕາມກໍານົດເວລາທີ່ໄດ້ແຈ້ງໃນກອງປະຊຸມ). ຢູ່ໃນແຕ່ລະບ້ານຂອງກຸ່ມບ້ານຈະຕ້ອງຈັດກອງປະຊຸມດັ່ງກ່າວນີ້ຂຶ້ນ. ຢູ່ໃນພື້ນທີ່ເປົ້າໝາຍເກົ່າຂອງ ທລຍ, ກອງປະຊຸມດັ່ງກ່າວນີ້ກໍຈະຖືກຈັດຂຶ້ນດຽວກັນ ແຕ່ພາຍໃຕ້ການດໍາເນີນໂດຍຜູ້ປະສານງານກຸ່ມບ້ານທີ່ມີປະສົບການ. ສ່ວນຢູ່ພື້ນທີ່ເປົ້າໝາຍໃໝ່ຂອງ ທລຍ, ພະນັກງານ ທລຍ ເມືອງ ແລະ ແຂວງ ຫລື ຜູ້ປະສານງານກຸ່ມທີ່ມີປະສົບການແລ້ວຈາກກຸ່ມບ້ານອື່ນ ຈະໄດ້ຊ່ວຍຜູ້ປະສານງານກຸ່ມບ້ານໃໝ່.

*ຕ້ອງຮັບປະກັນວ່າ ຈໍານວນແມ່ຍິງພາຍໃນບ້ານຕ້ອງເຂົ້າຮ່ວມ ຢ່າງໜ້ອຍບໍ່ໃຫ້ຫລຸດ 50% ແລະ ຜູ້ທີ່ເປັນຄົນຊົນເຜົ່າກໍຕ້ອງໄດ້ເຂົ້າຮ່ວມ*

- ***ການຈັດກອງປະຊຸມວາງແຜນພັດທະນາບ້ານ***

ກອງປະຊຸມດັ່ງກ່າວນີ້ ຄວນຈັດຂຶ້ນ 1-3 ອາທິດຫລັງຈາກກອງປະຊຸມແນະນໍາຂັ້ນບ້ານ ແລະ ຈະໄດ້ຈັດຂຶ້ນຢູ່ທຸກໆບ້ານ. ໂດຍ ຈຸດປະສົງ ຂອງກອງປະຊຸມດັ່ງກ່າວ ມີດັ່ງຕໍ່ໄປນີ້:

- ທົບທວນຄືນຈຸດປະສົງໂດຍຫຍໍ້, ລະບຽບຂັ້ນຕອນຕ່າງໆຂອງ ທລຍ
- ດໍາເນີນຂະບວນການວາງແຜນ ໂດຍເປີດໂອກາດໃຫ້ຊາວບ້ານໄດ້ລະບຸເຖິງສາເຫດຂອງຄວາມທຸກຍາກໃນບ້ານຂອງເຂົາເຈົ້າ ພ້ອມທັງສະແດງຄວາມຄາດຫວັງ ແລະ ເປົ້າໝາຍການພັດທະນາໃນອະນາຄົດ ໂດຍເນັ້ນໜັກໃສ່ຄວາມຕ້ອງການຂອງຊົນເຜົ່າທີ່ຢູ່ພາຍໃນບ້ານ.
- ກໍານົດຄວາມຕ້ອງການ ແລະ ຈັດລຽງບຸລິມະສິດໂຄງການຍ່ອຍ
- ເຂົ້າໃຈຢ່າງເລິກເຊິ່ງວ່າ ຄວາມຕ້ອງການແຕ່ລະອັນແມ່ນເພື່ອຫຍັງ ແລະ ການປະກອບສ່ວນຂອງຊຸມຊົນ ຕໍ່ການຈັດຕັ້ງປະຕິບັດໂຄງການເຫລົ່ານັ້ນ ມີອັນໃດແດ່
- ນໍາເອົາຄວາມຄິດຄວາມເຫັນຂອງກຸ່ມຊົນເຜົ່າ ແລະຜູ້ດ້ອຍໂອກາດ ຈາກການສົນທະນາເຂົ້າໃສ່ໃນຂະບວນການວາງແຜນພັດທະນາ. ໝາຍຄວາມວ່າ ຢູ່ແຕ່ລະບ້ານ ນອກຈາກຈະແບ່ງເປັນ 2 ກຸ່ມ (ກຸ່ມຍິງ ແລະ ກຸ່ມຊາຍ) ແລ້ວ ຖ້າມີຄວາມຈໍາເປັນອາດຈະໄດ້ແບ່ງເປັນຫລາຍກຸ່ມອີກ.

- ຄັດເລືອກຕົວແທນບ້ານ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນພັດທະນາຂັ້ນກຸ່ມ ແລະສ້າງຄວາມຄຸ້ນເຄີຍໃຫ້ແກ່ເຂົາເຈົ້າກ່ຽວກັບແຜນພັດທະນາກຸ່ມບ້ານ
- ແນະນຳ ກ່ຽວກັບກົນໄກສະແດງຄຳຄິດເຫັນ ແລະແກ້ໄຂບັນຫາ

*ຮັບປະກັນວ່າ "ຢ່າງໜ້ອຍ 50% ຂອງຈຳນວນຜູ້ ໃຫ່ຍພາຍໃນບ້ານ (ຜູ້ມີອາຍຸ 15 ປີຂຶ້ນໄປ)ຕ້ອງໄດ້ເຂົ້າຮ່ວມ ແລະ ຢ່າງໜ້ອຍ 60% ຂອງຈຳນວນຄອບຄົວຜູ້ທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມ. ໃນນັ້ນຢ່າງໜ້ອຍ 40% ຂອງຈຳນວນຜູ້ເຂົ້າຮ່ວມປະຊຸມທັງໝົດ ຕ້ອງແມ່ນຜູ້ຍິງ*

ແຜນວາດສະແດງຕໍ່ໄປນີ້ອາດສາມາດນຳໃຊ້ເພື່ອອະທິບາຍກິດຈະກຳ ທີ່ຈະຖືກລະບຸໄວ້ໃນແຜນພັດທະນາບ້ານ



*ຕົວຢ່າງການວິເຄາະບັນຫາບ້ານ*




*ຕົວຢ່າງການກຳນົດ ແລະຈັດລຽງບຸລິມະສິດຄວາມຕ້ອງການຂອງບ້ານ*

II. ບຸລິມະສິດຄວາມຕ້ອງການ ໃນການລົງທຶນ (ເພື່ອບັນລຸເປົ້າໝາຍຍຸດທະສາດ) – ພື້ນຖານໂຄງລ່າງ, ການຍົກລະດັບຊີວິດການເປັນຢູ່, ການຝຶກອົບຮົມ ແລະອື່ນໆ

| ລຳດັບບຸລິມະສິດຄວາມຕ້ອງການ | ທີ່ຕັ້ງ (ຊື່ບ້ານແລະກຸ່ມບ້ານ) | ສະຖານະພາບຂອງບ້ານ* | | | ຂະໜາດ / ມາດຕາສ່ວນ | | | | ກຸ່ມສະເໜີໂດຍ: | | | ຄາດຄະເນ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ | | ຄາດຄະເນ ງົບປະມານທີ່ຕ້ອງການລົງທຶນ |
|---|---|---|---|---|---|---|---|---|---|---|---|---|---|---|
| | | ຮັ່ງ | ປານກາງ | ທຸກ | ຫົວໜ່ວຍ | ຈຳນວນ | ຫົວໜ່ວຍ | ຈຳນວນ | ກຸ່ມຊາຍ | ກຸ່ມຍິງ | ກຸ່ມຊົນເຜົ່າ | ຊາຍ | ຍິງ | |
| 1. [illegible] | [illegible] | ☐ | ☑ | ☐ | ຫຼັງ | 1 | ຫ້ອງ | 3 | ☑ | ☑ | ☐ | 384 | 174 | 225 ລ້ານ |
| 2. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ແມັດ | 1000 | ☑ | ☑ | ☐ | 384 | 174 | 700 ລ້ານ |
| 3. [illegible] | [illegible] | ☐ | ☑ | ☐ | ຫຼັງ | 1 | ຫ້ອງ | 2 | ☑ | ☐ | ☐ | 282 | 139 | 150 ລ້ານ |
| 4. [illegible] | [illegible] | ☐ | ☐ | ☑ | ຫຼັງ | 1 | ແມັດ | [illegible] | ☑ | ☑ | ☐ | 998 | 490 | 150 ລ້ານ |
| 5. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ແມັດ | 40 | ☑ | ☐ | ☐ | 384 | 174 | 320 ລ້ານ |
| 6. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ໂຕ | 125 | ☐ | ☑ | ☐ | 282 | 139 | 15 ລ້ານ |
| 7. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ແມັດ | 3000 | ☑ | ☑ | ☐ | 384 | 174 | 105 ລ້ານ |
| 8. [illegible] | [illegible] | ☐ | ☐ | ☑ | ແຫ່ງ | 1 | ແມັດ | 3000 | ☑ | ☐ | ☐ | 998 | 490 | 95 ລ້ານ |
| 9. [illegible] | [illegible] | ☐ | ☑ | ☐ | [illegible] | 1 | | | ☑ | ☐ | ☐ | 282 | 139 | 5 ລ້ານ |
| 10. [illegible] | [illegible] | ☐ | ☐ | ☑ | ແຫ່ງ | 1 | ແມັດ | 20 | ☑ | ☑ | ☐ | 998 | 490 | 500 ລ້ານ |
| 11. [illegible] | [illegible] | ☐ | ☐ | ☑ | ແຫ່ງ | 1 | ກມ | 23 | ☐ | ☑ | ☐ | 998 | 490 | 1,725 ລ້ານ |
| 12. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ກມ | 3 | ☑ | ☑ | ☐ | 282 | 139 | 225 ລ້ານ |
| 13. [illegible] | [illegible] | ☐ | ☑ | ☐ | ແຫ່ງ | 1 | ກມ | 5 | ☐ | ☑ | ☐ | 384 | 174 | 375 ລ້ານ |
| 14. [illegible] | [illegible] | ☐ | ☐ | ☑ | [illegible] | 1 | ຄົນ | 20 | ☐ | ☑ | ☐ | 998 | 490 | 25 ລ້ານ |
| 15. [illegible] | [illegible] | ☐ | ☑ | ☐ | ຫຼັງ | 1 | | | ☑ | ☐ | ☐ | | | 70 ລ້ານ |

ໜ້າ 64

- ***ການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ***

ຂໍ້ມູນລຸ່ມນີ້ຄວນໄດ້ອະທິບາຍໃຫ້ຜູ້ເຂົ້າຮ່ວມຮັບຮູ້ ແຕ່ລະບ້ານຈະສົ່ງຕົວແທນບ້ານເຂົ້າຮ່ວມ 6 ຄົນ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມ້ບານ

**ວັດຖຸປະສົງ ແລະຈຸດປະສົງຕົ້ນຕໍຂອງກອງປະຊຸມໃນລະດັບກຸ່ມບ້ານຄື:**

- ເພື່ອສ້າງແຜນໄລຍະຍາວ (ແຜນພັດທະນາກຸ່ມບ້ານ _ ລວມທັງກວາມເອົາແຜນການລົງທຶນຂອງ ທລຍ ໄລຍະເວລາ 5 ປີ) ມີຈຸດປະສົງເພື່ອຫລຸດຜ່ອນຄວາມທຸກຍາກພາຍໃນກຸ່ມບ້ານ
- ຕົວແທນບ້ານຈະຕາງໜ້າໃຫ້ບ້ານຂອງຕົນເພື່ອນໍາສະເໜີແຜນພັດທະນາບ້ານຂອງຕົນ ຕໍ່ກຸ່ມບ້ານ ເພື່ອກໍາ ນົດບຸລິມະສິດຄວາມຕ້ອງການໃນດ້ານໂຄງລ່າງພື້ນຖານທາງເສດຖະກິດ-ສັງຄົມ ແລະ ການຝຶກອົບດ້ານ ວິຊາຊີບຕ່າງໆ
- ເພື່ອເປັນຕົວແທນບ້ານ (ແລະເປັນຕົວແທນເຂົ້າຮ່ວມກອງປະຊຸມອື່ນໆ) ຕາມກໍານົດເວລາໂຄງການ ທລຍ 4 ປີໃນການຈັດສັນງົບປະມານສໍາລັບກຸ່ມບ້ານ
- ເພື່ອກໍານົດປະເພດ ແລະ ທີ່ຕັ້ງຂອງໂຄງການຍ່ອຍທີ່ເປັນບຸລິມະສິດ ທີ່ຈະດໍາເນີນພາຍໃຕ້ໂຄງການ ທລຍ ແລະ ອີງໃສ່ເປົ້າໝາຍຍຸດທະສາດເພື່ອຫລຸດຜ່ອນຄວາມທຸກຍາກ ຂອງ ທລຍ (ເຊັ່ນ: 66% ຂອງໂຄງການຍ່ອຍຕ້ອງໄປສູ່ບ້ານທຸກຍາກທີ່ສຸດ)
- ເພື່ອຕັດສິນໃຈກ່ຽວກັບຄວາມເປັນໄປໄດ້ໃນການມີກິດຈະກໍາຝຶກອົບຮົມ ເພື່ອເພີ້ມການນໍາໃຊ້ ຫລື ເຂົ້າເຖິງໂຄງລ່າງພື້ນຖານທີ່ເປັນບຸລິມະສິດ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາກຸ່ມບ້ານ
- ເພື່ອທໍາຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມຈໍາເປັນໃນການປະກອບສ່ວນຂອງຊຸມຊົນ ແລະເພື່ອວາງ ແຜນການຈັດຕັ້ງທີມງານບ້ານ ແລະກຸ່ມບ້ານ ສໍາລັບແຕ່ລະໂຄງການຍ່ອຍທີ່ໄດ້ຮັບການອະນຸມັດ.
- ເພື່ອຄັດເລືອກຕົວແທນກຸ່ມບ້ານຈໍານວນ 4 ຄົນ ຈາກຕົວແທນບ້ານໄປນໍາສະເໜີແຜນພັດທະນາຂອງກຸ່ມຢູ່ ກອງປະຊຸມປະສານງານການວາງແຜນຂັ້ນເມືອງ
- ເພື່ອຄັດເລືອກຄະນະກໍາມະການ ກົນໄກສະແດງຄໍາຄິດເຫັນ ແລະແກ້ໄຂບັນຫາ (ກສກ) ຂັ້ນກຸ່ມບ້ານ ພ້ອມທັງອະທິບາຍ ກ່ຽວກັບພາລະບົດບາດ ແລະຄວາມຮັບຜິດຊອບຂອງເຂົາເຈົ້າ.

- ***ການຈັດກອງປະຊຸມປະສານງານວາງແຜນຂັ້ນເມືອງ***

ກອງປະຊຸມດັ່ງກ່າວນີ້ຈະຈັດຂຶ້ນພາຍໃນສອງອາທິດ ພາຍຫລັງສໍາເລັດກອງປະຊຸມສ້າງແຜນພັດທະນາກຸ່ມ ບ້ານໃນລະດັບເມືອງ.

- ຜູ້ເຂົ້າຮ່ວມກອງປະຊຸມ ອາດຈະປະກອບມີ: ເຈົ້າເມືອງ, ຮອງເຈົ້າເມືອງ, ຕາງໜ້າກຸ່ມບ້ານ, ຜູ້ປະສານງານ ກຸ່ມ, ພະນັກງານຈາກພະແນກການກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ, ອົງການພັດທະນາອື່ນໆ, ພາກ ເອກະຊົນ, ພະນັກງານ ທລຍ ທຸກຂັ້ນ.

**ຈຸດປະສົງຂອງກອງປະຊຸມເພື່ອ:**

- ນໍາສະເໜີ ແລະປຶກສາຫາລືກ່ຽວກັບແຜນພັດທະນາກຸ່ມບ້ານໃນໄລຍະຍາວ ໂດຍຕົວແທນແຕ່ລະກຸ່ມບ້ານ,
- ນໍາສະເໜີ ແລະ ສົນທະນານໍາຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວ ກັບການບໍລິການ ຕ່າງໆ ທີ່ຈະສະໜັບສະໜູນໃຫ້ແກ່ກຸ່ມບ້ານ,

- ທົບທວນແຜນການລົງທຶນຂອງ ທລຍ, ໂດຍສະເພາະ ແຜນປະຈຳຮອບວຽນ ຫຼື ສົກປີນັ້ນໆ,
- ປຶກສາຫາລືຮ່ວມກັບຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບຄວາມ ສາມາດ ແລະ ຄວາມເປັນໄປໄດ້ ໃນການສະໜັບສະໜູນການຄຸ້ມຄອງນ້ຳໃຊ້ ໂຄງ ການຍ່ອຍໃນໄລຍະຍາວ,
- ຕົກລົງ ກ່ຽວກັບຈຳນວນໂຄງການຍ່ອຍ ຈາກນັ້ນຈະໄດ້ດຳເນີນການອອກແບບ (ສຳຫຼວດ ແລະ ຂຽນລາຍລະອຽດ ບົດສະເໜີໂຄງການຍ່ອຍ)
- ຕົກລົງ ກ່ຽວກັບຄວາມເປັນໄປໄດ້ ໃນການເຮັດໂຄງການຮ່ວມກັນ (ເຊັ່ນ: ໂຄງ ການຮ່ວມກັນ ລະຫວ່າງບ້ານ ຫຼື ລະຫວ່າງກຸ່ມບ້ານ ທີ່ເຫັນວ່າຈະເປັນການປະຢັດ ຫຼື ມີການຄຸ້ມຄ່າກວ່າ)
- ມີຄວາມຄິດຄວາມເຫັນໃດແດ່ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ທລຍ ໃນ ຮອບວຽນຜ່ານມາ ທີ່ໄດ້ຮັບຈາກກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ຫຼື ອື່ນໆການວາງກອບເວລາເພື່ອໃຫ້ສຳເລັດໂຄງການຍ່ອຍ

***ແຜນວາດສະແດງຕໍ່ໄປນີ້ອາດນຳໃຊ້ເພື່ອອະທິບາຍກ່ຽວກັບກອງປະຊຸມປະສານງານວາງແຜນຂັ້ນເມືອງ***




- ***ການຈັດກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນພັດທະນາກຸ່ມບ້ານ***

ຫລັງຈາກໂຄງການຍ່ອຍໄດ້ຮັບການເຫັນດີ ໂດຍຕົວແທນແຕ່ລະກຸ່ມບ້ານ ແລະອະນຸມັດໂດຍຜ່ານກອງປະຊຸມປະສານງານວາງແຜນຂັ້ນເມືອງ. ຕ້ອງໄດ້ມີກອງປະຊຸມຢັ້ງຢືນຄືນແຜນພັດທະນາດັ່ງກ່າວຂັ້ນບ້ານ ເພື່ອແຈ້ງໃຫ້ປະຊາຊົນຮັບຊາບກ່ຽວກັບຜົນຂອງກອງປະຊຸມປະສານງານການວາງແຜນຂັ້ນເມືອງ. ຜູ້ປະ ສານງານກຸ່ມບ້ານ ແລະພະນັກງານເມືອງຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້. ກຳນົດເວລາສຳລັບກອງປະຊຸມຢັ້ງຢືນຄືນຂັ້ນກຸ່ມບ້ານ

ແລະການສ້າງຕັ້ງທີມງານກຸ່ມບ້ານ ຄວນຈະແຈ້ງໃຫ້ຕົວແທນບ້ານຮັບຊາບ.

**ເປົ້າໝາຍ:**

- ເພື່ອຮັບປະກັນວ່າ ພໍ່ແມ່ປະຊາຊົນແຕ່ລະບ້ານ ຮັບຮູ້ກ່ຽວກັບແຜນການພັດ ທະນາກຸ່ມບ້ານ. ເພື່ອແຈ້ງໃຫ້ເຂົາເຈົ້າຮັບຮູ້ຕື່ມ ແຜນການລົງທຶນຂອງ ທລຍ, ໂດຍສະເພາະບັນດາໂຄງການຍ່ອຍ ທີ່ຖືກຮັບຮອງແລ້ວ ຈະດໍາເນີນການສໍາ ຫລວດໃນເດືອນຕໍ່ມາ
- ເພື່ອຮັບຮອງແຜນການພັດທະນາກຸ່ມບ້ານຢ່າງເປັນທາງການໂດຍພໍ່ແມ່ປະຊາຊົນແຕ່ລະບ້ານ.

**ກໍານົດເວລາ:**

- ກອງປະຊຸມຄວນດໍາເນີນພາຍໃນ 2 ອາທິດ ຫລັງຈາກກອງປະຊຸມປະສານ ງານການວາງແຜນ ພັດທະນາກຸ່ມບ້ານ. ນາຍບ້ານ ແລະ ຜູ້ປະສານງານ ກຸ່ມບ້ານຈະເປັນຜູ້ກະກຽມກອງປະຊຸມ.

**ຄໍາແນະນໍາ:**

- ເຊັ່ນດຽວກັນກັບ ກອງປະຊຸມອື່ນໆຂອງບ້ານ, ຜູ້ໃຫຍ່ (ອາຍຸແຕ່ 15 ປີຂຶ້ນໄປ) ຈໍານວນ 50% ຂອງປະຊາກອນຈະຕ້ອງມີໜ້າເຂົ້າຮ່ວມປະຊຸມ
- ຜູ້ປະສານງານກຸ່ມບ້ານ ສະເໜີຜົນຂອງການວາງແຜນພັດທະນາກຸ່ມບ້ານ ແລະ ລາຍງານວ່າ ໂຄງການຍ່ອຍໃດໆທີ່ໄດ້ສະເໜີ ແລະ ບໍ່ໄດ້ສະເໜີສໍາ ລັບບ້ານຂອງເຂົາເຈົ້າ.
- ພ້ອມດຽວ ກັນ ຕ້ອງຊີ້ໃຫ້ເຫັນວ່າ ໂຄງການຍ່ອຍພື້ນ ຖານໂຄງລ່າງປະເພດໃດ, ກໍານົດເວລາຈັດຕັ້ງ ປະຕິບັດ (ປີໃດໃນໄລຍະ ແຜນການ 4 ປີ) ເຊັ່ນດຽວກັບ ສະຖານທີ່ກໍ່ສ້າງໂຄງການ ແລະ ງົບປະມານ ສໍາລັບໂຄງການຍ່ອຍ. ພວກເຂົາເຈົ້າ ຄວນໃຫ້ຄວາມກະຈ່າງແຈ້ງຕື່ມ.
- ນອກຈາກນັ້ນອີກ ຈະຕ້ອງໄດ້ແຍກໃຫ້ເຫັນ ວ່າຊຸມຊົນຈະສາມາດປະກອບ ສ່ວນເຂົ້າໄດ້ໃນ ການກໍ່ສ້າງໂຄງການ.

# ເອກະສານຊ້ອນທ້າຍ

ຕາຕະລາງ ຝຶກອົບຮົມໃຫ້ແກ່ຜູ້ປະສານງານກຸ່ມບ້ານ

| ກຳນົດເວລາ | ລາຍການ | ວິທີການ | ໝາຍເຫດ |
|---|---|---|---|
| **ມື້ທີ 1** | | | |
| 08:00-08:30 | ລົງທະບຽນ | ນຳໃຊ້ແບບຟອມລົງທະບຽນ | |
| 08:30-08:45 | ກ່າວຕ້ອນຮັບ ແລະ ນຳສະເໜີຈຸດປະສົງຂອງກອງປະຊຸມ | | |
| 08:45-09:00 | ມີຄຳເຫັນ ແລະ ກ່າວເປີດຊຸດຝຶກອົບຮົມໂດຍເຈົ້າເມືອງ/ຮອງເຈົ້າເມືອງ | | |
| 09:00-09:15 | ຜູ້ເຂົ້າຮ່ວມແນະນຳຕົນເອງ | ນຳໃຊ້ວິທີການແນະນຳຕົວ (ເກມອຸ່ນເຄື່ອງ) | |
| 09:15-09:45 | ສະພາບຂອງຄວາມທຸກຍາກ ຢູ່ ສ ປ ປ ລາວ ໂດຍສະເພາະຢູ່ ພາຍໃນເມືອງຂອງພວກເຮົາ (ຕົວຊີ້ວັດຂອງ ຄວາມທຸກຍາກ ພາຍໃຕ້ວຽກງານ ທລຍ ຄືຂາດການເຂົ້າເຖິງໂຄງລ່າງພື້ນຖານ 4 ) | ສະແດງຮູບຊຸມຊົນໃດນຶ່ງ ທີ່ຂາດການເຂົ້າເຖິງດ້ານໂຄ່ງລ່າງພື້ນຖານ | |
| 09:45-10:00 | ປະຫວັດຄວາມເປັນມາຂອງ ທລຍ | | |
| *10:10-10:15* | *ພັກຜ່ອນ* | | |
| 10:15-10:45 | ຜົນສຳເລັດຂອງ ທລຍ ໃນໄລຍະຜ່ານມາ | ສະແດງໃຫ້ເຫັນທາງດ້ານຈຳນວນ ແລະ ຄວາມເຂັ້ມແຂງຂອງຊຸມຊົນ ເຊັ່ນ: ການມີສ່ວນຮ່ວມ, ບົດບາດຍິງຊາຍ, ເຫັນອົກເຫັນໃຈຜູ້ທຸກຍາກ ແລະ ຊົນເຜົ່າ, ການປົກປັກຮັກສາສິ່ງແວດລ້ອມ ແລະ ແຫລ່ງອາຫານຕາມທຳມະຊາດ...) | |
| 10:45-12:00 | ນຳສະເໜີ: ຈຸດປະສົງ, ວິໃສທັດ, ຍຸດທະສາດ ຂອງ ທລຍ | | |
| *12:00-13:00* | *ພັກທ່ຽງ* | | |
| 13:00-14:00 | 10 ຫຼັກການ ທລຍ | • ອະທິບາຍປົດ 10 ສະເຕີ<br>• ໃຫ້ວຽກບ້ານແກ່ຜູ້ເຂົ້າຮ່ວມ | |
| 14:00-14:30 | ຮູບແບບການດຳເນີນວຽກງານ ທລຍ 2 (ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ) | | |

| | | | |
|---|---|---|---|
| 14:30-15:00 | ພື້ນທີ່ ແລະ ກຸ່ມເປົ້າໝາຍຂອງ ທລຍ ເປັນຫຍັງ ທລຍ ຈຶ່ງເອົາໃຈໃສ່ກຸ່ມເປົ້າໝາຍເຫລົ່ານີ້. | • ພື້ນທີ່ເປົ້າໝາຍ (ແຂວງ, ເມືອງ, ກຸ່ມບ້ານ ແລະ ບ້ານ)<br>• ກຸ່ມເປົ້າໝາຍ = ຜູ້ທຸກຍາກ, ຜູ້ຍິງ,ຊົນເຜົ່າ ແລະຜູ້ດ້ອຍໂອກາດ... | |
| *15:00-15:15* | *ພັກຜ່ອນ* | | |
| 15:15-15:45 | ຈຳນວນທຶນ, ແຫລ່ງທຶນ ແລະ ວິທີການຈັດສັນທຶນໃຫ້ແກ່ກຸ່ມບ້ານຂອງ ທລຍ 2 | | |
| 15:45-16:30 | ສະພາບໍລິຫານ ແລະ ໂຄງຮ່າງການຈັດຕັ້ງຂອງ ທລຍ | ເນັ້ນໜັກໃສ່ໂຄງຮ່າງການຈັດຕັ້ງລະ ດັບເມືອງ ໂດຍສະເພາະຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ ໃນນັ້ນອະທິບາຍພາ ລະບົດບາດແຕ່ລະທີມໂດຍຫຍໍ້ | |
| **ມື້ທີ 2** | | | |
| 08:00-08:30 | ລົງທະບຽນ | | |
| 08:30-08:45 | ທົບທວນຄືນບົດຮຽນໃນມື້ຜ່ານມາ | ຜູ້ເຂົ້າຮ່ວມຕອບຄຳຖາມ | |
| 09:00-10:00 | ຮອບວຽນການຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ທລຍ | ອະທິບາຍໂດຍຫຍໍ້ ແຕ່ລະຂັ້ນຕອນເພື່ອໃຫ້ເຫັນພາບລວມ | |
| *10:10-10:15* | *ພັກຜ່ອນ* | | |
| 10:15-11:00 | ກິດຈະກຳທີ່ ທລຍ ໃຫ້ການສະໜັບສະໜູນ ແລະ ບໍ່ສະໜັບສະໜູນ: | | |
| 11:00-11:30 | ການປະກອບສ່ວນຂອງຊຸມຊົນ | | |
| 11:30-12:00 | • ນະໂຍບາຍປ້ອງກັນຜົນກະທົບທາງສິ່ງແວດລ້ອມແລະສັງຄົມ<br>• ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນ ຫາ | ອະທິບາຍໂດຍຫຍໍ້ | |
| *12:00-13:00* | *ພັກທ່ຽງ* | | |
| 13:00-14:00 | ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ | | |
| 14:00-15:00 | • ພາລະບົດບາດຂອງພະນັກງານ ທລຍ ຂັ້ນເມືອງ (ພັດທະນາຊຸມຊົນ, ວິຊາການ ແລະ ການເງິນ)<br>• ພາລະບົດບາດ ແລະໜ້າທີ່ ຂອງຂະແໜງການທີ່ກ່ຽວຂ້ອງ ຕໍ່ກັບວຽກ ທລຍ | ລວມທັງ ລັກສະນະ ແລະ ຄຸນສົມບັດຂອງນັກພັດທະນາຊຸມຊົນ/ຜູ້ປະສານງານກຸ່ມບ້ານ | |
| *15:00-15:15* | *ພັກຜ່ອນ* | | |
| 15:15-15:30 | ການເປັນຜູ້ອຳນວຍຄວາມສະດວກ | | |

| | | | |
|---|---|---|---|
| 15:30-16:30 | ວິທີຈັດການດຳເນີນກອງປະຊຸມແນະນຳໂຄງການຂັ້ນບ້ານ | | |
| **ມື້ທີ 3** | | | |
| 08:00-08:30 | ລົງທະບຽນ | | |
| 08:30-08:45 | ທົບທວນຄືນບົດຮຽນໃນມື້ຜ່ານມາ | ຜູ້ເຂົ້າຮ່ວມຕອບຄຳຖາມ | |
| 08:45-12:00 | ***ສືບຕໍ່*** ວິທີຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ (ເນັ້ນໃສ່ອະທິບາຍປົດສະເຕີ 11 ແຜ່ນ) | ແບ່ງກຸ່ມເຮັດທົດລອງ | |
| ***12:00-13:00*** | ***ພັກທ່ຽງ*** | | |
| 13:00-16:30 | ວິທີຈັດການດຳເນີນກອງປະຊຸມວາງແຜນພັດທະນາຂັ້ນບ້ານ | | |
| **ມື້ທີ 4** | | | |
| 08:00-08:30 | ລົງທະບຽນ | | |
| 08:30-08:45 | ທົບທວນຄືນບົດຮຽນໃນມື້ຜ່ານມາ | ຜູ້ເຂົ້າຮ່ວມຕອບຄຳຖາມ | |
| 09:00-12:00 | ***ສືບຕໍ່*** ວິທີການດຳເນີນກອງປະຊຸມວາງແຜນພັດທະນາຂັ້ນບ້ານ | | |
| ***12:00-13:00*** | ***ພັກທ່ຽງ*** | | |
| 13:00-16:30 | ວິທີການດຳເນີນກອງປະຊຸມວາງແຜນພັດທະນາກຸ່ມບ້ານ | | |
| **ມື້ທີ 5** | | | |
| 08:00-08:30 | ລົງທະບຽນ | | |
| 08:30-08:45 | ທົບທວນຄືນບົດຮຽນໃນມື້ຜ່ານມາ | ຜູ້ເຂົ້າຮ່ວມຕອບຄຳຖາມ | |
| 08:45-10:00 | ***ສືບຕໍ່*** ວິທີຈັດການດຳເນີນກອງປະຊຸມວາງແຜນພັດທະນາກຸ່ມບ້ານ | | |
| ***10:10-10:15*** | ***ພັກຜ່ອນ*** | | |
| 10:15-12:00 | ອະທິບາຍການນຳໃຊ້ແບບຟອມ (ແບບຟອມ PDKV, VDP, KDP) | • ອະທິບາຍແບບຟອມ ແລະ ຮຽນ ຕື່ມຂໍ້ມູນຕົວຈິງໃສ່ແບບຟອມ<br>• ສະແດງຕົວຢ່າງປຶ້ມແຜນພັດທະນາກຸ່ມບ້ານ ຂອງແຂວງເກົ່າ | |
| ***12:00-13:00*** | ***ພັກທ່ຽງ*** | | |

| | | | |
|---|---|---|---|
| 13:00-15:00 | ກະກຽມການຈັດກອງປະຊຸມຕ່າງໆ ທີ່ຈະຈັດຂຶ້ນໃນຕໍ່ໜ້າ (ແນະນຳໂຄງ ການຂັ້ນບ້ານ, ວາງແຜນພັດທະນາບ້ານ, ວາງແຜນພັດທະນາກຸ່ມ<br>ບ້ານ...) | • ແບ່ງເປັນກຸ່ມ (ອີງຕາມຈຳນວນກຸ່ມບ້ານ) ເພື່ອກະກຽມເຈັ້ຽແຜ່ນໃຫ່ຍຕ່າງໆ<br>• ກຳນົດເວລາ/ຕາຕະລາງ ກອງປະ ຊຸມແນະນຳໂຄງການຂັ້ນບ້ານ | |
| ***15:00-15:15*** | ***ພັກຜ່ອນ*** | | |
| 15:15-16:00 | • ປະເມີນຜົນການຝຶກອົບຮົມ<br>• ສະຫລຸບຄືນເນື້ອໃນຂອງການຝຶກອົບຮົມ | • ນຳໃຊ້ແບບຟອມປະເມີນຜົນ<br>• ຜູ້ເຂົ້າຮ່ວມຕອບຄຳຖາມ | |
| 16:00-16:15 | ມີຄຳເຫັນ ແລະ ກ່າວປິດຊຸດຝຶກອົບຮົມໂດຍເຈົ້າເມືອງ/ຮອງເຈົ້າເມືອງ | | |

**ຫ້ອງວ່າການລັດຖະບານ**

**ຄະນະພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກຂັ້ນສູນກາງ**

**ກອງທຶນຫລຸດຜ່ອນຄວາມທຸກຍາກ(ທລຍ)**

ຖະໜົນນາໄຮ່ດຽວ, ເມືອງຈັນທະບູລີ, ຕູ້ ປ.ນ 4625, ນະຄອນຫລວງວຽງຈັນ,

ໂທ: 021-261 479, 261 480, ແຟັກ: 021- 261 481

*WWW.prflaos.org*

ທ່ານ ສາມາດໂທໂດຍບໍ່ໄດ້ເສຍຄ່າໂທ

ເວລາ 8:30 - 16:30ໂມງ, ວັນຈັນ-ສຸກ



161

ຖ້າທ່ານ ມີຄຳຄິດຄຳເຫັນ ຫລື

ຕຳນິຕິຊົມກ່ຽວກັບວຽກງານຂອງ ທລຍ